# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I.** ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ.................................01 - 06

**II.** ການເຄື່ອນໄຫວຂອງ ການນຳຂັ້ນສູງ...................................................................07 - 11

**III.** ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ...............................................12 - 14

**IV.** ການເຄື່ອນໄຫວຂອງ ວຽກງານການທູດປະຊາຊົນ........................................................15


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ເດືອນກຸມພາ 2026


ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ

**Tel: 030 9876030, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

## 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ວັນທີ 06 ກຸມພາ 2026, ສະຫາຍ ໂຕ ເລິມ, ເລຂາທິການໃຫຍ່ພັກກອມມູນິດຫວຽດນາມ, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ພັກປະຊາຊົນປະຕິວັດລາວ ແລະ ສົມເດັດອັກຄະມະຫາເສນາບໍດີ ເຕໂຈ ຮຸນແຊນ, ປະທານພັກປະຊາຊົນກຳປູເຈຍ ໄດ້ເປັນປະທານຮ່ວມໃນກອງປະຊຸມ 03 ພັກການເມືອງ ໂດຍມີບັນດານາຍົກລັດຖະມົນຕີຂອງຫວຽດນາມ, ລາວ ແລະ ກຳປູເຈຍ; ປະທານສະພາແຫ່ງຊາດຫວຽດນາມ ແລະ ປະທານສະພາແຫ່ງຊາດກຳປູເຈຍເຂົ້າຮ່ວມ ທີ່ສຳນັກງານໃຫຍ່ພັກປະຊາຊົນກຳປູເຈຍ, ນະຄອນຫຼວງພະນົມເປັນ. ກອງປະຊຸມຄັ້ງນີ້ ໄດ້ໄຂຂຶ້ນໃນຂະນະທີ່ ພັກກອມມູນິດຫວຽດນາມ ແລະ ພັກປະຊາຊົນປະຕິວັດລາວ ໄດ້ສຳເລັດກອງປະຊຸມໃຫຍ່ຂອງຕົນ, ໃນຂະນະທີ່ພັກປະຊາຊົນກຳປູເຈຍ ກໍພວມຈັດຕັ້ງປະຕິບັດໂຄງການການເມືອງ ໄລຍະ 2023-2028. ສິ່ງເຫຼົ່ານີ້ໄດ້ສ້າງພື້ນຖານທີ່ສຳຄັນ ໃນການເພີ່ມທະວີການແລກປ່ຽນທາງຍຸດທະສາດ, ຄວາມໄວ້ເນື້ອເຊື່ອໃຈທາງການເມືອງ ແລະ ການຕົກລົງເຫັນດີຕໍ່ທິດທາງຕົ້ນຕໍ ສຳລັບການຮ່ວມມືສາມຝ່າຍ ໃນໄລຍະການພັດທະນາໃໝ່. ໂດຍສະຫາຍ ໂຕ ເລິມ ໄດ້ແຈ້ງໃຫ້ຜູ້ເຂົ້າຮ່ວມຊາບ ກ່ຽວກັບສະພາບການຂອງ ຫວຽດນາມ ແລະ ຜົນສຳເລັດທາງຍຸດທະສາດທີ່ສຳຄັນຂອງ ກອງປະຊຸມໃຫຍ່ ຄັ້ງທີ XIV ຂອງພັກກອມມູນິດຫວຽດນາມ. ທ່ານໄດ້ເນັ້ນໜັກວ່າ ກອງປະຊຸມໃຫຍ່ ໄດ້ຢືນຢັນຄືນນະໂຍບາຍການຕ່າງປະເທດ ທີ່ຍຶດໝັ້ນເອກະລາດ, ເປັນເຈົ້າຕົນເອງ, ຫັນເປັນຫຼາຍຝ່າຍ ແລະ ຫຼາຍຮູບແບບ, ໂດຍໃຫ້ບູລິມະສິດແກ່ການພົວພັນຖານບ້ານໃກ້ເຮືອນຄຽງທີ່ເປັນມິດ ແລະ ສາຍພົວພັນມິດຕະພາບທີ່ເປັນມູນເຊື້ອພິເສດກັບ ລາວ ແລະ ກຳປູເຈຍ, ພ້ອມທັງປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນສັນຕິພາບ, ຄວາມໝັ້ນຄົງ ແລະ ການຮ່ວມມືໃນພາກພື້ນ ແລະ ສາກົນ. ສົມເດັດ ເຕໂຈ ຮຸນແຊນ ແລະ ສະຫາຍ ທອງລຸນ ສີສຸລິດ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດຂອງກອງປະຊຸມໃຫຍ່ ຄັ້ງທີ XIV ຂອງພັກກອມມູນິດຫວຽດນາມ; ໄດ້ຕີລາຄາສູງຕໍ່ນະໂຍບາຍການປ່ຽນແປງໃໝ່ຮອບດ້ານ, ວິນຕະນາການຍຸດທະສາດ ແລະ ຄວາມສາມາດໃນການນຳພາ ໃນໄລຍະພັດທະນາໃໝ່ ຂອງພັກກອມມູນິດຫວຽດນາມ, ພ້ອມທັງສະແດງຄວາມເຊື່ອໝັ້ນວ່າ ພາຍໃຕ້ການນຳພາອັນປີຊາສາມາດຂອງພັກກອມມູນິດຫວຽດນາມ ໂດຍມີ ສະຫາຍ ໂຕ ເລິມ ເປັນຜູ້ນຳໜ້າ, ຫວຽດນາມ ຈະປະຕິບັດມະຕິກອງປະຊຸມໃຫຍ່ໄດ້ຢ່າງມີຜົນສຳເລັດ, ກາຍເປັນປະເທດກຳລັງພັດທະນາທີ່ມີອຸດສາຫະກຳທັນສະໄໝ ແລະ ມີລາຍຮັບປານກາງ-ສູງ ໃນປີ 2030 ແລະ ເປັນປະເທດສັງຄົມນິຍົມທີ່ພັດທະນາແລ້ວ ທີ່ມີລາຍຮັບສູງ ໃນປີ 2045. ຜູ້ນຳທັງສາມ ໄດ້ເຫັນດີເປັນເອກະພາບວ່າ ການຮ່ວມມືສາມຝ່າຍ ສາມາດຍາດໄດ້ຜົນສຳເລັດອັນຕັ້ງໜ້າ ແລະ ໄດ້ຮັບການເສີມຂະຫຍາຍໃນທຸກຂົງເຂດ. ການພົວພັນດ້ານການເມືອງ ແລະ ການທູດ ຍັງຄົງເປັນເສົາຄ້ຳຫຼັກ, ໃນຂະນະທີ່ ການຮ່ວມມືດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີບົດບາດສຳຄັນ, ໂດຍມີຜົນງານທີ່ພົ້ນເດັ່ນ ລວມທັງກອງປະຊຸມຮ່ວມ ລັດຖະມົນຕີກະຊວງປ້ອງກັນປະເທດ ແລະ ການຊ້ອມຮົບກູ້ໄພ-ກູ້ຊີບສາມຝ່າຍ ຢູ່ ສປປ ລາວ, ການຮ່ວມມືດ້ານເສດຖະກິດ, ການຄ້າ ແລະ ການລົງທຶນ ມີຄວາມຄືບໜ້າໃນທາງບວກ, ໂດຍມີການເຕີບໂຕທາງເສດຖະກິດທີ່ແຂງແຮງ ຂອງຫວຽດນາມ, ກຳປູເຈຍ ແລະ ລາວ ໃນລະດັບ 8.02%, 6.3% ແລະ 4.2% ຕາມລຳດັບ ໃນປີ 2025. ພ້ອມກັນນັ້ນ, ຍັງໄດ້ຍົກໃຫ້ເຫັນເຖິງການແລກປ່ຽນລະຫວ່າງ ປະຊາຊົນກັບປະຊາຊົນທີ່ເພີ່ມຂຶ້ນ, ການຮ່ວມມືລະຫວ່າງ ທ້ອງຖິ່ນກັບທ້ອງຖິ່ນ, ແລະ ປະສິດທິຜົນຂອງການສື່ສານ ກ່ຽວກັບມິດຕະພາບ ແລະ ຄວາມສາມັກຄີ ລະຫວ່າງ 03 ປະເທດ ທີ່ເປັນໂອກາດອັນດີໃນການພົບປະແລກປ່ຽນ ແລະ ສ້າງສາຍພົວພັນມິດຕະພາບ ລະຫວ່າງຊາວໜຸ່ມ ຂອງສາມປະເທດ ຫວຽດນາມ, ລາວ ແລະ ກຳປູເຈຍ ໜຶ່ງໃນນັ້ນ ກໍແມ່ນການຈັດງານມະຫະກຳຊາວໜຸ່ມ ຢູ່ແຂວງ ກວາງຫງາຍ ຂອງຫວຽດນາມ ໃນທ້າຍປີ 2025.

ສະຫາຍ ໂຕ ເລິມ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມພ້ອມດ້ວຍຄະນະຜູ້ແທນຂັ້ນສູງ ໄດ້ເດີນທາງເຂົ້າຮ່ວມກອງປະຊຸມຄັ້ງທຳອິດຂອງ ຄະນະກຳມະການສັນຕິພາບສາກົນ (Board of Peace) ຮ່ວມກັບປະຊາຄົມສາກົນ ທີ່ ນະຄອນຫຼວງວໍຊິງຕັນ ດີຊີ, ສ.ອາເມຣິກາ ພ້ອມທັງເຄື່ອນໄຫວເຮັດວຽກ ແຕ່ວັນທີ 18-20 ກຸມພາ 2026, ຊຶ່ງສະຫາຍ ໂຕ ເລິມ ໄດ້ເປັນສັກຂີພິຍານໃນພິທີລົງນາມ ບັນດາຂໍ້ຕົກລົງການຮ່ວມມືລະຫວ່າງ ຫວຽດນາມ ແລະ ສ.ອາເມຣິກາ ໃນຂົງເຂດ ວິທະຍາສາດ-ເຕັກໂນໂລຊີ, ການຫັນເປັນດີຈີຕອນ, ການຄົມມະນາຄົມທາງອາກາດ, ສາທາລະນະສຸກ ຈຳນວນ 05 ສະບັບ ປະກອບມີ: 1) ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຫວຽດນາມ ໄດ້ມອບໃບອະນຸຍາດຄື້ນຄວາມຖີ່ໃຫ້ Star Link, ໂດຍອະນຸຍາດໃຫ້ ບໍລິສັດອາເມຣິກາ ສາມາດ

ຕິດຕັ້ງສະຖານີ 04 ແຫ່ງ ແລະ ສະຖານີຜູ້ໃຊ້ສູງສຸດ 600,000 ແຫ່ງ ໃນຫວຽດນາມ ໄລຍະທຳອິດ; 2) ການແລກປ່ຽນຂໍ້ຕົກລົງທາງດ້ານການເງິນ ລະຫວ່າງ VietJet Air ຂອງຫວຽດນາມ ແລະ Griffin Global Asset Management ຂອງ ສ.ອາເມຣິກາ; 3) ການເຊັນສັນຍາຈັດຊື້ເຮືອບິນ Boeing 787-9 ຈຳນວນ 40 ລຳ ລະຫວ່າງສາຍການບິນ Sun Phu Quoc ຂອງຫວຽດນາມ ແລະ ບໍລິສັດ Boeing ຂອງສ.ອາເມຣິກາ; 4) ການແລກປ່ຽນຂໍ້ຕົກລົງການຊື້ເຄື່ອງຈັກ GTF ແລະ ການບຳລຸງຮັກສາ ສຳລັບ A321NEO ແລະ A321XLR ລະຫວ່າງ VietJet Air ຂອງຫວຽດນາມ ແລະ Pratt & Whitney ຂອງສ.ອາເມຣິກາ; 5) ການແລກປ່ຽນຂໍ້ຕົກລົງການຊື້ລະບົບ Proton Mevion S250-FIT ລະຫວ່າງ ໂຮງໝໍ Tam Anh ຂອງຫວຽດນາມ ແລະ ລະບົບການແພດ Mevion ຂອງສ.ອາເມຣິກາ. ການໄປເຄື່ອນໄຫວເຮັດວຽກຄັ້ງນີ້ ຖືເປັນບາດກ້າວໜຶ່ງຂອງ ຫວຽດນາມ ໃນການປະກອບສ່ວນເຂົ້າໃນສາຍພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານ ລະຫວ່າງ ສອງປະເທດ.

**2) ພັກກອມມູນິດຈີນ**

ວັນທີ 04 ກຸມພາ 2026, ສະຫາຍ ສີ ຈິ້ນຜິງ, ປະທານປະເທດ ແຫ່ງ ສປ ຈີນ ໄດ້ພົບປະກັບ ທ່ານ ວະລາດີເມຍ ປູຕິນ, ປະທານາທິບໍດີຣັດເຊຍ ຜ່ານຮູບແບບວິດີໂອທາງໄກ ຢູ່ຫໍສະພາປະຊາຊົນ ທີ່ນະຄອນຫຼວງປັກກິ່ງ. ສະຫາຍ ສີ ຈິ້ນຜິງ ໄດ້ເນັ້ນໜັກວ່າ ປີ 2026 ແມ່ນປີເລີ່ມຕົ້ນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 05 ປີຄັ້ງທີ XV ຂອງຈີນ, ທັງເປັນປີສ້າງຕັ້ງສາຍພົວພັນຄູ່ຮ່ວມປະສານງານຍຸດທະສາດ ລະຫວ່າງ ຈີນ-ຣັດເຊຍ ຄົບຮອບ 30 ປີ. ສອງຝ່າຍຕ້ອງກຳໂອກາດທາງປະຫວັດສາດນີ້ໄວ້, ຖືເອົາການປະສານງານຍຸດທະສາດຢ່າງເລິກເຊິ່ງກວ່າເກົ່າ, ວິທີການເຄື່ອນໄຫວທີ່ຫ້າວຫັນ ແລະ ມີຄວາມຮັບຜິດຊອບຫຼາຍຂຶ້ນໃນຖານະປະເທດໃຫຍ່ ເພື່ອຮັບປະກັນໃຫ້ການພົວພັນລະຫວ່າງ ຈີນ-ຣັດເຊຍ ໃຫ້ໄດ້ຮັບການພັດທະນາຢ່າງບໍ່ຢຸດຢັ້ງຕາມເສັ້ນທາງທີ່ຖືກຕ້ອງ. ສ່ວນ ທ່ານ ປູຕິນ ກ່າວວ່າ ຣັດເຊຍ-ຈີນຕ້ອງສືບຕໍ່ສະໜັບສະໜູນເຊິ່ງກັນ ແລະ ກັນ ໃນການປົກປ້ອງອະທິປະໄຕ, ຄວາມໝັ້ນຄົງຂອງປະເທດ, ການບັນລຸຄວາມຈະເລີນຮຸ່ງເຮືອງດ້ານການພັດທະນາເສດຖະກິດ-ສັງຄົມ, ຊຸກຍູ້ການແລກປ່ຽນດ້ານການສຶກສາ, ວັດທະນະທຳ ແລະ ຂົງເຂດອື່ນໆຢ່າງໝັ້ນຄົງ. ຣັດເຊຍ ຍິນດີຮ່ວມກັບ ຈີນ ສືບຕໍ່ເພີ່ມທະວີການປະສານງານຍຸດທະສາດຢູ່ອົງການສະຫະປະຊາຊາດ ແລະ ເວທີຫຼາຍຝ່າຍອື່ນໆ.

ວັນທີ 04 ກຸມພາ 2026, ສະຫາຍ ສີ ຈິ້ນຜິງ, ປະທານປະເທດ ແຫ່ງ ສປ ຈີນ ໄດ້ສົນທະນາຜ່ານທາງໂທລະສັບກັບ ທ່ານ ໂດນັນ ທຣຳ, ປະທານາທິບໍດີ ສ.ອາເມຣິກາ. ສະຫາຍ ສີ ຈິ້ນຜິງ ໄດ້ກ່າວວ່າ: ສປ ຈີນ ແລະ ສ.ອາເມຣິກາ ຕ້ອງອີງຕາມຄວາມເຫັນທີ່ສອງຝ່າຍເປັນເອກະພາບກັນ ກ່ອນໜ້ານີ້ ເພື່ອເພີ່ມທະວີການສົນທະນາ ແລະ ການແລກປ່ຽນ, ຄວບຄຸມຄວາມຂັດແຍ່ງຢ່າງເໝາະສົມ, ຂະຫຍາຍການຮ່ວມມືຕົວຈິງ, ສ້າງຄວາມໄວ້ເນື້ອເຊື່ອໃຈກັນຢ່າງບໍ່ຢຸດຢັ້ງ, ເຮັດໃຫ້ປີ 2026 ກາຍເປັນປີທີ່ ສປ ຈີນ ແລະ ສ.ອາເມຣິກາ ໃນຖານະສອງປະເທດໃຫຍ່ໄດ້ກ້າວຂຶ້ນສູ່ຄວາມເຄົາລົບ ເຊິ່ງກັນ ແລະ ກັນ, ຢູ່ຮ່ວມກັນຢ່າງສັນຕິ ແລະ ມີການຮ່ວມມື ທີ່ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ. ໄຕ້ຫວັນ ແມ່ນຜືນແຜ່ນດິນຂອງ ສປ ຈີນ, ສປ ຈີນ ຈຳເປັນຕ້ອງເດັດດ່ຽວປົກປ້ອງອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຕົນ ແລະ ບໍ່ມີຄວາມເປັນໄປໄດ້ ທີ່ຈະແບ່ງແຍກໄຕ້ຫວັນ ໃຫ້ເປັນເອກະລາດ. ສ່ວນທ່ານ ໂດນັນ ທຣຳ ກ່າວວ່າ: ສ.ອາເມຣິກາ ຍິນດີເພີ່ມທະວີການຮ່ວມມືກັບ ສປ ຈີນ ເພື່ອຊຸກຍູ້ໃຫ້ການພົວພັນລະຫວ່າງສອງປະເທດ ໄດ້ຮັບການພັດທະນາໃໝ່; ສ.ອາເມຣິກາ ຈະເອົາໃຈໃສ່ຕໍ່ຄວາມກັງວົນຂອງ ສປ ຈີນ ກ່ຽວກັບບັນຫາໄຕ້ຫວັນ ແລະ ຍິນດີຮັກສາການແລກປ່ຽນກັບ ສປ ຈີນ ເພື່ອຮັກສາສະພາບທີ່ດີ ແລະ ຄວາມໝັ້ນຄົງ ຂອງການພົວພັນ ລະຫວ່າງ ສ.ອາເມຣິກາ ແລະ ສປ ຈີນ.

**3) ພັກແຮງງານເກົາຫຼີ**

ໃນວັນທີ 09 ກຸມພາ 2026, ສະຫາຍ ກິມ ເຈິງ ອຸນ, ຜູ້ນຳສູງສຸດ ສປປ ເກົາຫຼີ ໄດ້ໃຫ້ກຽດເປັນປະທານ ໃນພິທີສະເຫຼີມສະຫຼອງວັນສ້າງຕັ້ງກອງທັບ ສປປ ເກົາຫຼີ ຄົບຮອບ 78 ປີ ທີ່ກະຊວງປ້ອງກັນປະເທດ. ໃນພິທີດັ່ງກ່າວ ໄດ້ມີການເລົ່າປະຫວັດ ກ່ຽວກັບ ຄຸນງາມຄວາມດີຂອງນັກຮົບສະໄໝສົງຄາມ ແລະ ໄດ້ມີການເດີນສວນສະໜາມ ຂອງທະຫານຈຳນວນໜຶ່ງ. ສະຫາຍ ກິມ ເຈິງ ອຸນ ຍັງໄດ້ກ່າວວ່າ ກອງທັບ ສປປ ເກົາຫຼີ ຈະມີບົດບາດອັນພົ້ນເດັ່ນຂຶ້ນຕື່ມໃນອີກ 05 ປີຕໍ່ໜ້າ ໂດຍຈະມີການສືບຕໍ່ພັດທະນາດ້ານວຽກງານປ້ອງກັນປະເທດ ຢ່າງຕັ້ງໜ້າ ເພື່ອຮັບປະກັນດ້ານຄຸນນະພາບ ຂອງບັນດາອາວຸດຕ່າງໆ ກໍ່ຄືການກຽມພ້ອມຕອບໂຕ້ ຕໍ່ການຮຸກຮານຂອງອິດທິກຳລັງປໍລະປັກ. ພ້ອມນີ້, ສະຫາຍ ຍັງໄດ້ສົ່ງກຳລັງໃຈຢ່າງອົບອຸ່ນ ແລະ ຊົມເຊີຍຕໍ່ຜູ້ບັນຊາການ ແລະ ນັກຮົບທີ່ປະຕິບັດງານພິເສດຢູ່ ຣັດເຊຍ ແລະ ໄດ້ເນັ້ນໜັກ ໃນການຮ່ວມມືຢ່າງໜັກແໜ້ນກັບ ຣັດເຊຍ.

## 2. ພາກພື້ນອາຊີ-ປາຊີຟິກ ແລະ ອາຟຣິກາ

**ການເມືອງໄທ:** ໃນວັນທີ 08 ກຸມພາ 2026, ພັກພູມໃຈໄທ ນໍາໂດຍທ່ານ ອະນຸທິນ ຊານວີຣະກຸນ, ຮັກສາການນາຍົກລັດຖະມົນຕີ ໄດ້ປະກາດໄຊຊະນະໃນການເລືອກຕັ້ງທົ່ວໄປ ຈາກການນັບຄະແນນ ປະມານ 94%, ຊຶ່ງພັກພູມໃຈໄທ ໄດ້ຮັບຄະແນນສຽງເປັນອັນດັບ 01 ຊຶ່ງຄາດວ່າ ຈະໄດ້ບ່ອນນັ່ງໃນສະພາທັງໝົດ 193 ບ່ອນນັ່ງ, ແບ່ງເປັນສະມາຊິກສະພາເຂດ 174 ບ່ອນນັ່ງ ແລະ ສສ ບັນຊີລາຍຊື່ 19 ບ່ອນນັ່ງ. ຂະນະທີ່ ພັກປະຊາຊົນ ໄດ້ຮັບຄະນະແນນເປັນອັນດັບ 02, ໄດ້ບ່ອນນັ່ງປະມານ 118 ບ່ອນນັ່ງ ສ່ວນພັກເພື່ອໄທ ໄດ້ຮັບຄະແນນສຽງເປັນອັບດັບ 03, ໄດ້ຮັບບ່ອນນັ່ງປະມານ 74 ບ່ອນນັ່ງ. ທ່ານ ອະນຸທິນ ກ່າວວ່າ ໄຊຊະນະດັ່ງກ່າວ ແມ່ນຂອງປະຊາຊົນທຸກຄົນ ບໍ່ວ່າພວກເຂົາຈະເລືອກພັກພູມໃຈໄທ ຫຼື ບໍ່ ກໍຕາມ ແລະ ທ່ານ ພ້ອມຈະຮັບໃຊ້ປະຊາຊົນໄທ ຢ່າງສຸດຄວາມສາມາດ. ໄຊຊະນະຂອງພັກພູມໃຈໄທຄັ້ງນີ້ ສະທ້ອນໃຫ້ເຫັນເຖິງ ການປ່ຽນແປງຂອງການເມືອງໄທ ທີ່ຫັນໄປທາງ ອະນຸລັກນິຍົມ ແລະ ຊາດນິຍົມ ຫຼາຍຂຶ້ນ. ນອກນັ້ນ, ທ່ານ ອະນຸທິນ ຈະເປີດກວ້າງໃນການເຮັດວຽກຮ່ວມກັບພັກອື່ນໆ ແລະ ໄດ້ປະກາດຢ່າງເປັນທາງການວ່າ ພັກພູມໃຈໄທ ໄດ້ຕົກລົງທີ່ຈະຮ່ວມກັບພັກເພື່ອໄທ ເພື່ອຈັດຕັ້ງລັດຖະບານປະສົມ. ການສະໜັບສະໜູນຈາກພັກເພື່ອໄທ ຈະເຮັດໃຫ້ ທ່ານ ອະນຸທິນ ມີສຽງສ່ວນຫຼາຍສະພາ ແລະ ສາມາດສ້າງລັດຖະບານທີ່ມີສະຖຽນລະພາບທາງການເມືອງ ແລະ ຄວາມໝັ້ນຄົງໃຫ້ແກ່ປະເທດຊາດ. ໃນຂະນະທີ ປະຊາຊົນສ່ວນໃຫຍ່ (ຫຼາຍກວ່າ 60%) ເຫັນດີໃຫ້ມີການຮ່າງລັດຖະທໍາມະນູນໃໝ່ ແທນສະບັບ ປີ 2017 ແລະ ມີການລົງປະຊາມະຕິ ກ່ຽວກັບການຮ່າງລັດຖະທໍາມະນູນສະບັບໃໝ່. ສະແດງໃຫ້ເຫັນວ່າ ເຖິງແມ່ນຝ່າຍອະນຸລັກນິຍົມ ຈະຊະນະການເລືອກຕັ້ງ, ແຕ່ປະຊາຊົນຍັງຕ້ອງການການປ່ຽນແປງທາງໂຄງສ້າງກົດໝາຍສູງສຸດ ຂອງປະເທດ.

**ການເມືອງມຽນມາ:** ລັດຖະບານມຽນມາ ໄດ້ປະກາດແຜນການສ້າງຕັ້ງໜ່ວຍງານໃໝ່ ທີ່ມີຊື່ວ່າ ສະພາທີ່ປຶກສາແຫ່ງສະຫະພາບ (Union Consultative Council) ເພື່ອເຮັດໜ້າທີ່ກວດກາ ແລະ ເບິ່ງແຍ່ງກອງທັບ ລວມທັງການບໍລິຫານປະເທດຂອງ ລັດຖະບານພົນລະເຮືອນ, ຊຶ່ງນັກວິເຄາະກ່າວວ່າ ໜ່ວຍງານດັ່ງກ່າວ ຈະເຮັດໃຫ້ທ່ານ ມິນ ອອງ ຫຼ່າຍ, ຜູ້ນໍາທະຫານສູງສຸດຂອງ ມຽນມາ ສາມາດດໍາລົງຕໍາແໜ່ງເປັນຜູ້ນໍາປະເທດໄດ້ໂດຍບໍ່ຕ້ອງສູນເສຍອໍານາດຄວບຄຸມກອງທັບ ແລະ ວ່າ ໜ້າທີ່ຂອງໜ່ວຍງານນີ້ກວ້າງຂວາງເປັນພິເສດ ເຮັດໃຫ້ສາມາດຄວບຄຸມທຸກອົງປະກອບທີ່ສໍາຄັນຂອງ ຄວາມໝັ້ນຄົງແຫ່ງຊາດ ແລະ ຂະບວນການນິຕິບັນຍັດໄດ້ ສະແດງວ່າ ລັດຖະບານຊຸດໃໝ່ຂອງ ມຽນມາທີ່ຈະຈັດຕັ້ງຂຶ້ນໃນເດືອນເມສາ 2026 ຈະຕ້ອງຢູ່ພາຍໃຕ້ການຊີ້ນໍາຂອງ ກອງທັບຕະຫຼອດໄປ. ກອງປະຊຸມສະພາແຫ່ງຊາດ ມີກໍານົດຈະຈັດຂຶ້ນໃນເດືອນມີນາ 2026, ພາຍຫຼັງການປະກາດໄຊຊະນະຂອງ ພັກສະຫະພາບສາມັກຄີ ແລະ ການພັດທະນາ (USDP) ທີ່ໄດ້ຮັບການສະໜັບສະໜູນຈາກກອງທັບ ໄດ້ຮັບໄຊນະນະຈາກການເລືອກຕັ້ງທົ່ວໄປ ໃນຕົ້ນເດືອນມັງກອນ 2026 ຜ່ານມາ ໂດຍມີບ່ອນນັ່ງໃນສະພາສູງ ແລະ ສະພາຕໍ່າເຖິງ 81%.

**ການເມືອງຍີ່ປຸ່ນ:** ພາຍຫຼັງ ທ່ານ ນາຍົກລັດຖະມົນຕີຍີ່ປຸ່ນ ໄດ້ປະກາດຍຸບສະພາໃນທ້າຍເດືອນມັງກອນ 2026 ຜ່ານມາ, ວັນທີ 08 ກຸມພາ 2026, ໄດ້ຈັດການເລືອກຕັ້ງທົ່ວໄປຍີ່ປຸ່ນຂຶ້ນ ໂດຍແມ່ນພັກເສລີປະຊາທິປະໄຕ (LDP) ພາຍໃຕ້ການນໍາຂອງ ທ່ານ ນາງ ຊານາເອະ ທາກາອິຈິ (Sanae Takaichi), ນາຍົກລັດຖະມົນຕີ ໄດ້ຮັບໄຊຊະນະຢ່າງຖ້ວມລົ້ນ ດ້ວຍຄະແນນສຽງ 316 ບ່ອນນັ່ງ ຈາກ 465 ບ່ອນນັ່ງໃນສະພາ (ເກີນ 02/03 ໃນຈໍານວນບ່ອນນັ່ງທັງໝົດ ໃນສະພາຕໍ່າ) ຊຶ່ງເປັນໄຊຊະນະ ທີ່ໄດ້ຮັບຄະແນນສຽງສູງສຸດ ຄັ້ງປະຫວັດສາດ, ກາຍເປັນພັກການເມືອງທີ່ມີສຽງສ່ວນຫຼາຍ ໃນການຈັດຕັ້ງລັດຖະບານ. ນະໂຍບາຍສໍາຄັນຕ່າງໆຂອງພັກ LDP ຍັງຄົງສືບຕໍ່ນະໂຍບາຍ ໃນໄລຍະຫາສຽງ ທີ່ວາງຄາດໝາຍໄວ້ກ່ອນໜ້ານີ້ ເປັນຕົ້ນແມ່ນ ນະໂຍບາຍຄວາມໝັ້ນຄົງ ຄາດວ່າຈະມີການເພີ່ມງົບປະມານຂຶ້ນຕື່ມອີກ ປະມານ 2%-3.5% ຂອງ GDP; ດັດແກ້ລັດຖະທໍາມະນູນຈໍານວນໜຶ່ງ ໂດຍສະເພາະ ແມ່ນມາດຕາ 09 ເພື່ອເປີດທາງໃຫ້ຍີ່ປຸ່ນ ສາມາດມີກອງທັບເປັນຂອງຕົນເອງ ເພື່ອເສີມສ້າງຄວາມເຂັ້ມແຂງ ໃນວຽກງານປ້ອງກັນຊາດ ເພື່ອອະນຸມັດໃຫ້ສາມາດໂຈມຕີ, ຕອບໂຕ້ໃນກໍລະນີຕ່າງໆ, ຊຶ່ງເປັນບັນຫາທີ່ຫຼາຍຝ່າຍຄາດຄະເນວ່າ ຈະສົ່ງຜົນກະທົບ ຕໍ່ຄວາມເຄັ່ງຕຶງໃນການພົວພັນ ລະຫວ່າງ ຍີ່ປຸ່ນ-ສປ ຈີນ ທີ່ປິ່ນອ້ອມບັນຫາໄຕ້ຫວັນ, ສະພາບການຢູ່ບໍລິເວນທະເລຈີນຕາເວັນອອກ ແລະ ອື່ນໆ, ກົງກັນຂ້າມ ກໍຈະເປັນຜົນດີຕໍ່ການພົວພັນ ລະຫວ່າງ ຍີ່ປຸ່ນ-ສ.ອາເມຣິກາ ໂດຍສະເພາະດ້ານການທະຫານ, ການພັດທະນາ ແລະ ຂະຫຍາຍການຄອບຄອງອາວຸດ ລວມທັງການມີບົດບາດຂອງ ສ.ອາເມຣິກາຢູ່ໃນພາກພື້ນດັ່ງກ່າວ.

**ອະດີດປະທານາທິບໍດີ ສ.ເກົາຫຼີ ທ່ານ ຢຸນ ຊອກ ຢອນ (Yoon Suk Yeol) ຖືກຕັດສິນຈໍາຄຸກຕະຫຼອດຊີວິດ:** ວັນທີ 19 ກຸມພາ 2026, ສານ ສ.ເກົາຫຼີ ໄດ້ພິພາກສາຕັດສິນສັ່ງຈໍາຄຸກຕະຫຼອດຊີວິດ ທ່ານ ຢຸນ ຊອກ ຢອນ, ອະດີດ ປະທານາທິບໍດີ ສ.ເກົາຫຼີ ໃນຂໍ້ຫາ ກໍ່ການກະບົດ ແລະ ໃຊ້ອໍານາດໃນທາງທີ່ຜິດ ຈາກກໍລະນີ ການປະກາດກົດໄອຍະການເສິກສຸກເສີນ ໃນວັນທີ 03 ທັນວາ 2024 ທີ່ກໍ່ໃຫ້ເກີດຄວາມວຸ້ນວາຍຢ່າງໜັກໜ່ວງພາຍໃນປະເທດ. ພ້ອມດ້ວຍບັນດາບຸກຄົນທີ່ດໍາລົງຕໍາແໜ່ງສໍາຄັນ ໃນຄະນະລັດຖະບານ ຂອງທ່ານ ໃນຄະດີດັ່ງກ່າວ ເປັນຕົ້ນແມ່ນ: ອະດີດລັດຖະມົນຕີກະຊວງປ້ອງກັນປະເທດ, ອະດີດຜູ້ບັນຊາການໜ່ວຍສືບຂ່າວລັບ ແລະ ອະດີດຜູ້ບັນຊາການຕໍາຫຼວດ. ໃນຂະນະທີ, ທະນາຍຄວາມຂອງ ທ່ານ ຢຸນ ໄດ້ວິພາກວິຈານຄໍາຕັດສິນດັ່ງກ່າວຢ່າງໜັກໜ່ວງ ແລະ ຄາດວ່າ ຈະຍື່ນອຸທອນຄໍາຕັດສິນ ຕໍ່ສານຂັ້ນສູງຕໍ່ໄປ. ຄໍາຕັດສິນນີ້ ຖືເປັນເຫດ ການປະຫວັດສາດໃນ ສ.ເກົາຫຼີ ຫາກມີການອຸທອນ, ຂະບວນການທາງກົດໝາຍ ອາດຈະແກ່ຍາວໄປຮອດປີ 2027.

## 3. ພາກພື້ນເອີຣົບ-ອາເມຣິກາ

**ບັນຫາຄວາມຂັດແຍ່ງ ລະຫວ່າງ ອູແກຣນ ແລະ ຣັດເຊຍ:** ທັງສອງຝ່າຍ ຍັງສືບຕໍ່ໂຈມຕີກັນດ້ວຍໂດຣນ ແລະ ລູກສອນໄຟ. ຣັດເຊຍ ໄດ້ໂຈມຕີພື້ນຖານໂຄງລ່າງດ້ານພະລັງງານຂອງ ອູແກຣນ ຢ່າງໜັກໜ່ວງ ເຮັດໃຫ້ເກີດໄຟຟ້າມອດເປັນວົງກວ້າງໃນຫຼາຍເມືອງ ລວມທັງນະຄອນຫຼວງກີແອບ ທ່າມກາງສະພາບອາກາດໜາວຈັດເຖິງ -15°C. ສ່ວນອູແກຣນ ໄດ້ສົ່ງໂດຣນຫຼາຍຮ້ອຍລໍາເຂົ້າໄປໂຈມຕີໃນດິນແດນ ຣັດເຊຍ ໂດຍແນໃສ່ໂຈມຕີໂຮງກັ່ນນໍ້າມັນ ແລະ ຄັງນໍ້າມັນ ໃນເຂດ Velikiye Luki ແລະ Pskov. ຂະນະທີ່, ການເຈລະຈາສັນຕິພາບ ລະຫວ່າງ ຣັດເຊຍ-ອູແກຣນ ທີ່ເຊີແນວ, ປະເທດສະວິດ ໃນລະຫວ່າງວັນທີ 17-18 ກຸມພາ 2026 ຍັງບໍ່ມີການຕົກລົງໃດໆທີ່ເປັນຮູບປະທໍາ ທ່າມກາງການກົດດັນຂອງ ສ.ອາເມຣິກາ ໃຫ້ຢຸດຕິສົງຄາມທີ່ດໍາເນີນມາເກືອບ 04 ປີ ຊຶ່ງບັນຫາສໍາຄັນທີ່ບໍ່ສາມາດຕົກລົງກັນໄດ້ ຍັງຄົງແມ່ນເລື່ອງດິນແດນ ໂດຍຣັດເຊຍ ຕ້ອງການໃຫ້ ອູແກຣນ ຍົກດິນແດນເຂດ Donetsk ທັງໝົດໃຫ້ຕົນ , ຂະນະທີ່ ອູແກຣນ ໄດ້ປະຕິເສດຄວາມຕ້ອງການດັ່ງກ່າວ. ນອກນັ້ນ ຣັດເຊຍ ແລະ ອູແກຣນ ຍັງມີຄວາມເຫັນທີ່ແຕກຕ່າງກັນ ໃນບັນຫາເລື່ອງການຄອບຄອງໂຮງງານໄຟຟ້ານິວເຄຼຍ Zaporizhzhia ແລະ ບົດບາດຂອງກອງກໍາລັງຕາເວັນຕົກ ທີ່ຈະເຂົ້າມາປະຈໍາການໃນອູແກຣນ.

**ການເລືອກຕັ້ງປອກຕຸຍການ:** ໃນວັນທີ 08 ກຸມພາ 2026, ປອກຕຸຍການ ໄດ້ຈັດການເລືອກຕັ້ງປະທານາທິບໍດີ ຮອບທີ 02 ຂຶ້ນ ເນື່ອງຈາກຮອບທໍາອິດບໍ່ມີຜູ້ສະໝັກທ່ານໃດ ໃນຈໍານວນ 11 ທ່ານ ໄດ້ຄະແນນເກີນ 50% ຕາມທີ່ໄດ້ກໍານົດໄວ້ໃນລະບຽບການເລືອກຕັ້ງ. ການເລືອກຕັ້ງຮອບ 02 ແມ່ນໄດ້ເອົາຜູ້ສະໝັກທີ່ໄດ້ຄະແນນສູງສຸດສອງທ່ານຈາກຮອບທີ 01 ໂດຍແມ່ນທ່ານ ອັນໂຕນີໂອ ໂຮເຊ ເຊກູໂຣ (António José Seguro), ຜູ້ສະໝັກຈາກພັກສັງຄົມນິຍົມ (the Socialist Party-PS) ດ້ວຍຄະແນນ 31.2% ແລະ ທ່ານ ອັນເດຣ ເວນຕູຣາ (André Ventura), ຈາກພັກ Chega (ພັກຂວາຈັດ) ດ້ວຍຄະແນນ 23.5%. ຜົນການເລືອກຕັ້ງເຫັນວ່າ ທ່ານ ອັນໂຕນີໂອ ໂຮເຊ ເຊກູໂຣ, ໄດ້ຮັບໄຊຊະນະດ້ວຍຄະແນນ 66.82% ສ່ວນທ່ານ ອັນເດຣ ເວນຕູຣາ ໄດ້ຄະແນນພຽງ 33.18%. ໃນນັ້ນ, ມີປະຊາຊົນມາລົງຄະແນນສຽງ 50.1% (ເນື່ອງຈາກມີພາຍຸເຂົ້າໃນຫຼາຍຂົງເຂດ) ຊຶ່ງທ່ານ ອັນໂຕນີໂອ ໂຮເຊ ເຊກູໂຣ ຈະເຂົ້າພິທີສາບານຕົນເພື່ອຮັບຕໍາແໜ່ງ ໃນວັນທີ 09 ມີນາ 2026. ນະໂຍບາຍຫຼັກຂອງ ທ່ານ ເຊກູໂຣ ຈະແມ່ນສຸມໃສ່ການເປັນສູນກາງ ເພື່ອຮັກສາສະຖຽນລະພາບຂອງປະເທດ ໂດຍສະເພາະ ການສ້າງຄວາມເປັນເອກະພາບ ແລະ ຄວາມສາມັກຄີພາຍໃນຊາດ, ການເປັນຕົວກາງໄກ່ເກ່ຍທາງການເມືອງ.

**ກອງປະຊຸມ ຄະນະກໍາມະການສັນຕິພາບ ສາກົນ (Board of Peace):** ກອງປະຊຸມ ຄະນະກໍາມະການສັນຕິພາບ ສາກົນ (Board of Peace), ໄດ້ຈັດຂຶ້ນໃນວັນທີ 19 ກຸມພາ 2026 ທີ່ນະຄອນຫຼວງ ວໍຊິງຕັນ ດີຊີ, ສ.ອາເມຣິກາ ໂດຍການເປັນປະທານ ຂອງ ທ່ານ ໂດນັນ ທຣໍາ ປະທານາທິບໍດີ ສ.ອາເມຣິກາ ແລະ ມີບັນດາຜູ້ນໍາ, ຜູ້ແທນຈາກ 47 ປະເທດ ໃນນັ້ນລວມມີປະເທດໃນຂົງເຂດອາຊຽນ (ຫວຽດນາມ, ກໍາປູເຈຍ ແລະ ອິນໂດເນເຊຍ), ໃນພາກພື້ນຕາເວັນອອກກາງ (ເຊັ່ນ: ອິດສະຣາແອນ, ອາຣັບບີ ຊາອຸດີ, ກາຕາ, ເອເມຣັດ ອາຣັບ) ແລະ ປະເທດອື່ນໆ ເຂົ້າຮ່ວມ, ແຕ່ປະເທດມະຫາອໍານາດ ເຊັ່ນ: ອັງກິດ, ຝຣັ່ງ, ເຢຍລະມັນ, ຈີນ ລວມເຖິງ ນະຄອນລັດວາຕິກັນ ໄດ້ປະຕິເສດການເຂົ້າຮ່ວມເປັນສະມາ ຊິກ ເນື່ອງຈາກຄວາມກັງວົນ ກ່ຽວກັບບົດບາດຂອງອົງການນີ້ ຈະໄປທັບຊ້ອນກັບອົງການສະຫະປະຊາຊາດ (UN). ນອກຈາກນີ້ ຍັງມີບາງປະເທດ ເຊັ່ນ ອິນເດຍ ແມ່ນເຂົ້າຮ່ວມໃນຖານະ ຜູ້ສັງເກດການ ເທົ່ານັ້ນ. ເຖິງແມ່ນວ່າ ເປົ້າໝາຍເລີ່ມຕົ້ນຂອງ Board of Peace ແມ່ນເພື່ອສ້າງສັນຕິພາບ ແລະ ຟື້ນຟູເຂດກາຊາ ຫຼັງສົງຄາມ,

ແຕ່ໃນກອງປະຊຸມຄັ້ງນີ້ ທ່ານ ໂດນັນ ທຣໍາ ໄດ້ສະເໜີໃຫ້ຂະຫຍາຍພາລະບົດບາດ, ໜ້າທີ່ ຂອງອົງກອນດັ່ງກ່າວ ເພື່ອແກ້ໄຂບັນຫາຄວາມຂັດແຍ່ງອື່ນໆ ໃນໂລກຕື່ມອີກ ພ້ອມທັງ ໄດ້ປະກາດຈະມອບເງິນສະໜັບສະໜູນ 10 ຕື້ໂດລາສະຫະລັດ ເຂົ້າໃນອົງກອນດັ່ງກ່າວ. ນອກຈາກນີ້, ຍັງມີ 09 ປະເທດສະມາຊິກ ທີ່ໃຫ້ຄໍາໝັ້ນສັນຍາວ່າ ຈະສົມທົບທຶນຊ່ວຍເຫຼືອຕື່ມອີກ 07 ຕື້ໂດລາສະຫະລັດ, ລວມທັງການຈັດຕັ້ງກອງກໍາລັງຮັກສາຄວາມສະຫງົບ ມີ 05 ປະເທດ ຄື: ອານບານີ, ອິນໂດເນເຊຍ, ກາຊັກສະຖານ, ໂຄໂຊໂວ ແລະ ມາຣົກ ໄດ້ຕົກລົງສົ່ງທະຫານເຂົ້າຮ່ວມໃນກອງກໍາລັງຮັກສາຄວາມສະຫງົບສາກົນ (ISF) ຈໍານວນ 20,000 ຄົນ ເພື່ອປະຕິບັດການໃນເຂດກາຊາ. ຂະນະດຽວກັນ, ເອຢິບ ແລະ ຊອກດານີ ກໍໄດ້ຕົກລົງຮັບໜ້າທີ່ຝຶກອົບຮົມກໍາລັງຕໍາຫຼວດປາແລັດສະຕິນ ຈໍານວນ 12,000 ຄົນ.

**ກອງປະຊຸມຄວາມໝັ້ນຄົງມິວນິກ ຄັ້ງທີ 62 (Munich Security Conference ຫຼື MSC):** ກອງປະຊຸມຄວາມໝັ້ນຄົງມິວນິກ ຄັ້ງທີ 62 ໄດ້ຈັດຂຶ້ນ ລະຫວ່າງວັນທີ 13-15 ກຸມພາ 2026, ທີ່ເມືອງມິວນິກ, ປະເທດເຢຍລະມັນ (ຖືກຈັດຂຶ້ນເປັນປະຈໍາທຸກໆປີ ໃນເດືອນກຸມພາ) ໂດຍມີຜູ້ເຂົ້າຮ່ວມຫຼາຍກວ່າ 1,000 ທ່ານ ຈາກ 115 ປະເທດທົ່ວໂລກ. ກອງປະຊຸມດັ່ງກ່າວ ແມ່ນໜຶ່ງໃນເວທີປຶກສາຫາລືລະດັບສາກົນທີ່ໃຫຍ່ ແລະ ສໍາຄັນ ກ່ຽວກັບນະໂຍບາຍຄວາມໝັ້ນຄົງ ເພື່ອເປີດໂອກາດໃຫ້ຜູ້ເຂົ້າຮ່ວມໄດ້ປຶກສາຫາລື ເພື່ອແລກປ່ຽນກັນຢ່າງກົງໄປກົງມາ ແລະ ພົບປະແບບທະວີພາຄີນອກຮອບ (Corridor Diplomacy) ເພື່ອຫາທາງອອກໃນບັນຫາຄວາມຂັດແຍ່ງ ແລະ ສ້າງຄວາມເຂົ້າໃຈກ່ຽວກັບໄພຂົ່ມຂູ່ທົ່ວໂລກ. ໃນໂອກາດເຂົ້າຮ່ວມກອງປະຊຸມ ລັດຖະມົນຕີກະຊວງການຕ່າງປະເທດ ຈີນ ແລະ ສ.ອາເມຣິກາ ໄດ້ໃຊ້ໂອກາດນີ້ເພື່ອປຶກສາຫາລືກັນ. ໂດຍສອງຝ່າຍ ເຫັນດີເອກະພາບທີ່ຈະສົ່ງເສີມການພົວພັນຮ່ວມມືທາງດ້ານການເມືອງ, ການທູດໃນເວທີພາກພື້ນ ແລະ ສາກົນ, ທີ່ມີຜົນປະໂຫຍດຮ່ວມກັນ ບົນພື້ນຖານດ້ານຍຸດທະສາດທີ່ຜູ້ ນໍາຂອງ ທັງສອງປະເທດທີ່ໄດ້ເຫັນດີເປັນເອກະພາບຮ່ວມກັນໃນໄລຍະຜ່ານມາ, ໂດຍເນັ້ນຫຼັກການເຄົາລົບ ເຊິ່ງກັນ ແລະ ກັນ, ຢູ່ຮ່ວມກັນຢ່າງສັນຕິ, ຕ່າງຝ່າຍຕ່າງມີຜົນປະໂຫຍດຮ່ວມກັນ. ນອກຈາກນີ້, ລັດຖະມົນຕີກະຊວງການຕ່າງປະເທດ ຍີ່ປຸ່ນ ແລະ ສ.ອາເມຣິກາ ໄດ້ພົບປະກັນ, ຊຶ່ງສອງຝ່າຍ ເຫັນດີເປັນເອກະພາບຮ່ວມກັນໃນຫຼາຍດ້ານ ພ້ອມທັງຢືນຢັນຢ່າງໜັກແໜ້ນ ໃນການເປັນພັນທະມິດດ້ານຍຸດທະສາດທີ່ເຂັ້ມແຂງ; ໂດຍສະເພາະ ການຮ່ວມມືໃນຂົງເຂດຄວາມໝັ້ນຄົງ ໃນຂົງເຂດອາຊີຕາເວັນອອກສ່ຽງໃຕ້ ເປັນຕົ້ນແມ່ນ ບັນຫາແຫຼມເກົາຫຼີ, ການຂະຫຍາຍອິດທິພົນຂອງຈີນ ຢູ່ບໍລິເວນທະເລຈີນຕາເວັນອອກ ແລະ ທະເລຈີນໃຕ້ ລວມທັງບັນຫາໄຕ້ຫວັນ; ສົ່ງເສີມ ແລະ ເພີ່ມທະວີການຮ່ວມມືດ້ານເສດຖະກິດ ແລະ ເຕັກໂນໂລຊີ ພ້ອມທັງ ຈະປະສານສົມທົບຢ່າງໃກ້ຊິດຕໍ່ບັນດາປະເທດຕ່າງໆ ທີ່ມີແນວຄິດໄປໃນລວງດຽວກັນ ເພື່ອໃຫ້ບັນລຸເປົ້າໝາຍແນວຄິດ ອິນໂດ-ປາຊີກຟິກ ທີ່ເສລີ ແລະ ເປີດກວ້າງ. ຂະນະທີ່, ຜູ້ນໍາເອີຣົບ ຮຽກຮ້ອງໃຫ້ ມີຄວາມເປັນອິດສະຫຼະທາງດ້ານຍຸດທະສາດຫຼາຍຂຶ້ນ ສະທ້ອນໃຫ້ເຫັນເຖິງຄວາມວິຕົກກັງວົນທີ່ເພີ່ມຂຶ້ນ ຕໍ່ລະບຽບສາກົນທີ່ແຕກແຍກທີ່ຂະຫຍາຍຕົວຂຶ້ນ ໃນການພົວພັນລະຫວ່າງ ສອງຝັ່ງມະຫາສະມຸດອັດລັງຕິກ.

## 4. ພາກພື້ນຕາເວັນອອກກາງ

**ຄວາມຂັດແຍ່ງເຂດກາຊາ**: ໃນວັນທີ 04 ກຸມພາ 2026, ກອງທັບອິດສະຣາແອນ ໄດ້ໂຈມຕີໃນຫຼາຍພື້ນທີ່ເຂດກາຊາ ເຮັດໃຫ້ມີຜູ້ເສຍຊີວິດຢ່າງໜ້ອຍ 21 ຄົນ ຊຶ່ງກອງທັບອິດສະຣາແອນ ອ້າງວ່າ ເພື່ອໂຈມຕີໂຄງລ່າງພື້ນຖານຂອງກຸ່ມຮາມາສ ທີ່ຢູ່ໃຕ້ດິນ ແລະ ອາຄານບາງບ່ອນ ທີ່ຖືກນໍາໃຊ້ເປັນບ່ອນບັນຊາການ ພ້ອມທັງກ່າວຫາ ກຸ່ມຮາມາສລະເມີດສັນຍາຢຸດຍິງ, ຂະນະທີ່ ກຸ່ມຮາມາສ ກໍໄດ້ອອກມາປະຕິເສດວ່າ ບໍ່ແມ່ນຄວາມຈິງ. ນອກນັ້ນ ໃນວັນທີ 02 ກຸມພາ 2026, ອິດສະຣາແອນ ໄດ້ມີການເປີດດ່ານຂ້າມແດນຣາຟາ (ລະຫວ່າງ ກາຊາ ແລະ ເອຢິບ) ຄືນໃໝ່ ເປັນຄັ້ງທໍາອິດ ໃນຮອບ 02 ປີ ນັບແຕ່ເຂົ້າຄວບຄຸມດ່ານໃນເດືອນພຶດສະພາ 2024 ຊຶ່ງເປັນສ່ວນໜຶ່ງຂອງ ຂໍ້ຕົກລົງຢຸດຍິງທີ່ສະໜັບສະໜູນໂດຍ ສ.ອາເມຣິກາ, ການເປີດດ່ານຄັ້ງນີ້ ກໍານົດໃຫ້ມີພຽງຊາວປາແລັດສະຕິນຈໍານວນໜ້ອຍ ແລະ ຜູ້ປ່ວຍໜັກເທົ່ານັ້ນ ທີ່ໄດ້ຮັບອະນຸຍາດໃຫ້ຂ້າມແດນ ປະມານ 40-50 ຄົນ ພ້ອມທັງອະນຸຍາດໃຫ້ລົດຂົນສົ່ງຢາ ແລະ ສະບຽງອາຫານເຂົ້າໄປປະມານ 100-120 ຄັນຕໍ່ມື້ ສ່ວນໃຫຍ່ແມ່ນມາຈາກ ອົງການອະນາໄມໂລກ (WHO) ແລະ ອົງການອາຫານໂລກ (WFP).

**ຄວາມຂັດແຍ່ງລະຫວ່າງ ສ.ອາເມຣິກາ-ອີຣານ:** ໃນວັນທີ 06 ມັງກອນ 2026, ໄດ້ມີການເຈລະຈາລະຫວ່າງ ຜູ້ແທນຂອງ ສ.ອາເມຣິກາ ແລະ ອີຣານ ທີ່ນະຄອນຫຼວງມັດສະກັດ (Muscat), ປະເທດໂອມານ ເພື່ອປຶກສາຫາລືສະເພາະບັນຫານິວເຄຼຍ ແລະ ການຫຼຸດຜ່ອນມາດຕະການຂວ້ຳບາດ ໂດຍປະຕິເສດຄວາມພະຍາຍາມຕ່າງໆ ທີ່ຈະຮ່ວມໂຄງການລູກສອນໄຟໄລຍະໄກ ພ້ອມທັງປຶກສາຫາລືເພື່ອແກ້ໄຂບັນຫາຄວາມຂັດແຍ່ງໃນຕາເວັນອອກກາງ ບໍ່ໃຫ້

ລຸກລາມເປັນສົງຄາມພາກພື້ນ ຊຶ່ງ ສ.ອາເມຣິກາ ຮຽກຮ້ອງໃຫ້ ອີຣານ ຢຸດສົ່ງອາວຸດໃຫ້ກຸ່ມຮູຕີ ໃນຂະນະທີ່ ອີຣານ ຮຽກຮ້ອງໃຫ້ ສ.ອາເມຣິກາ ກົດດັນອິດສະຣາແອນ ໃຫ້ຢຸດຍິງໃນເຂດກາຊາ ຖາວອນ. ແຕ່ການເຈລະຈາດັ່ງກ່າວ ຍັງບໍ່ມີຜົນຮັບທີ່ເປັນຮູບປະທຳ, ເຊິ່ງສະແດງອອກຈາກ ສະຖານະການພາຍຫຼັງການເຈລະຈານີ້ ຍັງສືບຕໍ່ເຄັ່ງຕຶງ ເນື່ອງຈາກທັງສອງຝ່າຍ ຍັງມີຈຸດຢືນທີ່ແຕກຕ່າງກັນ ໂດຍອີຣານ ຢືນຢັນໜັກແໜ້ນວ່າ ການເຈລະຈາຈະຕ້ອງແມ່ນສະເພາະບັນຫານິວເຄຼຍເທົ່ານັ້ນ ພ້ອມທັງປະຕິເສດຂໍ້ຮຽກຮ້ອງຂອງ ສ.ອາເມຣິກາ ທີ່ຕ້ອງການໃຫ້ ອີຣານ ຢຸດການເສີມສະມັດຕະພາບທາດຢູເຣນຽມເປັນສູນ (Zero uranium enrichment) ແລະ ຂີດເສັ້ນຕາຍວ່າ ບັນຫາລູກສອນໄຟ ແລະ ອິດທິພົນໃນພາກພື້ນ ແມ່ນເລື່ອງທີ່ບໍ່ສາມາດນຳມາເຈລະຈາຕໍ່ລອງໄດ້ ໂດຍອີຣານ ຢ້ຳຕື່ມອີກວ່າ ຄວາມຄືບໜ້າທີ່ແທ້ຈິງຈະເກີດຂຶ້ນໄດ້ ກໍຕໍ່ເມື່ອ ສ.ອາເມຣິກາ ຍົກເລີກມາດຕະການຂວ້ຳບາດທັງໝົດ. ທ່າທີຂອງສອງຝ່າຍໃນປັດຈຸບັນ, ສ.ອາເມຣິກາ ໃຊ້ຍຸດທະວິທີກົດດັນສູງສຸດ ໂດຍນຳໃຊ້ກອງທັບເຮືອ ແລະ ມາດຕະການຂວ້ຳບາດ ເພື່ອໃຫ້ອີຣານ ຍອມຮັບໃນເງື່ອນໄຂບັນຫານິວເຄຼຍ, ໃນຂະນະທີ່ ອີຣານ ໃຊ້ວິທີການຂົ່ມຂູ່ວ່າ ຈະໂຈມຕີຖານທັບ ສ.ອາເມຣິກາ ແລະ ພັນທະມິດໃນພາກພື້ນ ຫາກຕົນເອງຖືກຮຸກຮານ.

ການເຈລະຈາຮອບ 02 ລະຫວ່າງ ສ.ອາເມຣິກາ-ອີຣານ ໂດຍປະເທດໂອມານ ເປັນຕົວກາງ ໄດ້ຈັດຂຶ້ນໃນວັນທີ 17 ກຸມພາ 2026, ທີ່ເຊີແນວ, ປະເທດສະວິດ ເພື່ອປຶກສາຫາລື ກ່ຽວກັບຂໍ້ຕົກລົງນິວເຄຼຍ. ໂດຍລັດຖະມົນຕີກະຊວງການຕ່າງ ປະເທດອີຣານ ກ່າວວ່າ ການເຈລະຈາ ມີຄວາມສ້າງສັນກ່ອນຄັ້ງທຳອິດ, ສອງຝ່າຍ ໄດ້ບັນລຸຂໍ້ຕົກລົງພື້ນຖານ ເພື່ອປູທາງໄປສູ່ການຈັດຕັ້ງປະຕິບັດ ເປັນຂໍ້ຕົກລົງນິວເຄຼຍ ໃນອານາຄົດ. ເຖິງຢ່າງໃດກໍຕາມ ໃນວັນທີ 19 ກຸມພາ 2026, ອີຣານ ໄດ້ເລີ່ມການຊ້ອມຮົບທາງນ້ຳຮ່ວມກັບ ຣັດເຊຍ ໃນອ່າວໂອມານ. ການເຄື່ອນໄຫວດັ່ງກ່າວເປັນການສົ່ງສັນ ຍານເຖິງຄວາມເປັນນ້ຳໜຶ່ງໃຈດຽວກັນກັບ ຣັດເຊຍ, ໃນຂະນະດຽວກັນ ກໍເປັນເວທີໃຫ້ ອີຣານ ໄດ້ຝຶກຊ້ອມການໂຈມຕີ ແລະ ປ້ອງກັນໃກ້ກັບຊ່ອງແຄບຮໍມຸດ. ສ່ວນປະທານາທິບໍດີ ໂດນັນ ທຣຳ ໄດ້ອອກມາເຕືອນອີຣານ ອີກຄັ້ງ ຖ້າຫາກບໍ່ສາມາດບັນລຸຂໍ້ຕົກລົງນິວເຄຼຍ ພາຍໃນ 10-15 ມື້ ສ.ອາເມຣິກາ ກໍພ້ອມທີ່ຈະໃຊ້ກຳລັງທາງທະຫານ ຊຶ່ງສອດຄ່ອງກັບການທີ່ ສ.ອາເມຣິກາ ກຳລັງເພີ່ມກຳລັງຮົບໃນພາກພື້ນຕາເວັນອອກກາງ. ຄວາມຕ້ອງການຂອງ ສ.ອາເມຣິກາ ແມ່ນເນັ້ນໃສ່ ການເຈລະຈາເພື່ອບັນລຸຂໍ້ຕົກລົງນິວເຄຼຍ, ຕ້ອງການໃຫ້ອີຣານ ຢຸດເສີມສະມັດຕະພາບທາດຢູເຣນຽມເປັນສູນ (Zero uranium enrichment), ຈຳກັດການພັດທະນາໂຄງການລູກສອນໄຟ ແລະ ຫ້າມບໍ່ໃຫ້ສະໜັບສະໜູນກອງກຳລັງໃນພາກພື້ນ. ສ່ວນຈຸດຢືນຂອງ ອີຣານ ແມ່ນຈະເຈລະຈາເລື່ອງນິວເຄຼຍ ເທົ່ານັ້ນ.

## II. ການເຄື່ອນໄຫວຂອງ ການນຳຂັ້ນສູງ

### 1) ຄະນະບໍລິຫານງານສູນກາງພັກ ປປ ລາວ ສົ່ງໂທລະເລກອວຍພອນວັນສ້າງຕັ້ງ ພັກກອມມູນິດຫວຽດນາມ ຄົບຮອບ 96 ປີ

ວັນທີ 3 ກຸມພາ 2026, ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ໄດ້ສົ່ງໂທລະເລກອວຍພອນ ເຖິງ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ເນື່ອງໃນໂອກາດວັນສ້າງຕັ້ງພັກກອມມູນິດຫວຽດນາມ ຄົບຮອບ 96 ປີ, ໂດຍມີເນື້ອໃນ ດັ່ງນີ້:

ເນື່ອງໃນໂອກາດ ວັນສ້າງຕັ້ງພັກກອມມູນິດຫວຽດນາມ ທີ່ມີກຽດສະຫງ່າ ຄົບຮອບ 96 ປີ (03/02/1930 - 03/02/2026), ຄະນະບໍລິຫານສູນກາງພັກປະຊາຊົນປະຕິວັດລາວ, ສະມາຊິກພັກ ແລະ ປະຊາຊົນລາວບັນດາເຜົ່າ ຂໍສະແດງຄວາມຊົມເຊີຍຢ່າງສຸດອົກສຸດໃຈ ແລະ ຂໍສົ່ງພອນໄຊອັນປະເສີດ ທີ່ເຕັມໄປດ້ວຍໄມຕີຈິດມິດຕະພາບອັນດູດດື່ມ, ຄວາມສາມັກຄີພິເສດອັນສະໜິດສະໜົມ ຖານສະຫາຍອ້າຍນ້ອງ ມາຍັງ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ສະມາຊິກພັກ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ທຸກຖ້ວນໜ້າ.

ພັກກອມມູນິດຫວຽດນາມ ໄດ້ເປັນຄັນທຸງນຳພາ ພາລະກິດປະຕິວັດ ຢ່າງອົງອາດກ້າແກ່ນ ແລະ ປະດິດສ້າງ ດ້ວຍການວາງແນວທາງທີ່ຖືກຕ້ອງສະຫຼາດສ່ອງໃສ ແລະ ໄດ້ນຳພາປະຊາຊົນຫວຽດນາມອ້າຍນ້ອງ ສ້າງວິລະກຳອັນລ້ຳເລີດໃນພາລະກິດແຫ່ງການຕໍ່ສູ້ກູ້ຊາດ ແລະ ຍາດໄດ້ໄຊຊະນະອັນຍິ່ງໃຫຍ່ ຈົນກ້າວໄປສູ່ການປົດປ່ອຍ ແລະ ທ້ອນໂຮມປະເທດຊາດຢ່າງສົມບູນ ແລະ ສະຫງ່າຜ່າເຜີຍໃນປີ 1975 ແລະ ສືບຕໍ່ນຳພາການດຳເນີນພາລະກິດປ່ຽນແປງໃໝ່ ຢ່າງຮອບດ້ານ ໃນໄລຍະ 40 ປີ ເຊິ່ງປະຊາຊົນຫວຽດນາມອ້າຍນ້ອງ ສາມາດສືບຕໍ່ຍາດໄດ້ຜົນສຳເລັດອັນໃຫຍ່ຫຼວງ, ຮອບດ້ານ ແລະ ມີຄວາມໝາຍສຳຄັນທາງປະຫວັດສາດ, ເຮັດໃຫ້ ສສ ຫວຽດນາມ ມີສະຖຽນລະພາບທາງການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ເສດຖະກິດຂະຫຍາຍຕົວໃນລະດັບສູງຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການປັບປຸງໃຫ້ດີຂຶ້ນຢ່າງບໍ່ຢຸດຢັ້ງ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບມີຄວາມເຂັ້ມແຂງ, ການພົວພັນຮ່ວມມືກັບຕ່າງປະເທດ ສືບຕໍ່ໄດ້ຮັບການເປີດກວ້າງ, ບົດບາດ, ອິດທິພົນຂອງ ພັກກອມມູນິດຫວຽດນາມ ແລະ ສສ ຫວຽດນາມ ນັບມື້ນັບພົ້ນເດັ່ນຂຶ້ນ ໃນເວທີພາກພື້ນ ແລະ ສາກົນ.

ພວກຂ້າພະເຈົ້າ ຂໍສະແດງຄວາມຊົມເຊີຍຢ່າງຈິງໃຈ ຕໍ່ຜົນສຳເລັດອັນສະຫງ່າງາມ ຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XIV ຂອງ ພັກກອມມູນິດຫວຽດນາມ ແລະ ເຊື່ອໝັ້ນຢ່າງໜັກແໜ້ນວ່າ ພາຍໃຕ້ການນຳພາອັນສະຫຼາດສ່ອງໃສຂອງພັກກອມມູນິດຫວຽດນາມ ທີ່ມີກຽດສະຫງ່າໂດຍແມ່ນ ສະຫາຍ ເລຂາທິການໃຫຍ່ ໂຕ ເລິມ ເປັນຜູ້ນຳໜ້ານັ້ນ ຈະສືບຕໍ່ນຳພາປະຊາຊົນຫວຽດນາມອ້າຍນ້ອງ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XIV ຂອງພັກ ຢ່າງມີໄຊ, ນຳພາປະເທດຊາດກ້າວຂຶ້ນຢ່າງແຮງແຮງໃນສັງກາດໃໝ່ ເພື່ອສັນຕິພາບ, ເອກະລາດ, ປະຊາທິປະໄຕ, ຮັ່ງມີເຂັ້ມແຂງ, ຈະເລີນວັດທະນາ, ສີວິໄລ, ມີຄວາມຜາສຸກ ແລະ ກ້າວຂຶ້ນສູ່ສັງຄົມນິຍົມຢ່າງໜັກແໜ້ນ.

ພວກຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນຢ່າງເລິກເຊິ່ງ ມາຍັງ ພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ທີ່ໄດ້ໃຫ້ການສະໜັບສະໜູນຊ່ວຍເຫຼືອອັນລ້ຳຄ່າ, ໃຫຍ່ຫຼວງ, ມີປະສິດທິຜົນ ແລະ ທັນການ ແກ່ພາລະກິດການປະຕິວັດລາວ ໃນພາລະກິດການຕໍ່ສູ້ປົດປ່ອຍຊາດໃນເມື່ອກ່ອນ ກໍຄື ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຂອງພວກຂ້າພະເຈົ້າ ໃນປັດຈຸບັນ.

ພັກ, ລັດ ແລະ ປະຊາຊົນລາວ ຈະສືບຕໍ່ຮ່ວມກັບ ພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ເຮັດສຸດຄວາມສາມາດຂອງຕົນ ເພື່ອປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອຂອງ ມິດຕະພາບອັນຍິ່ງໃຫຍ່ ແລະ ຄວາມສາມັກຄີພິເສດ ລາວ-ຫວຽດນາມ ທີ່ຫາຍາກນີ້ ໃຫ້ໝັ້ນຄົງ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ ເພື່ອນຳເອົາຜົນປະໂຫຍດຕົວຈິງມາສູ່ ປະຊາຊົນສອງຊາດພວກເຮົາ ກໍຄື ເພື່ອສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມື ເພື່ອການພັດທະນາ ຢູ່ໃນພາກພື້ນ ແລະ ໃນໂລກ.

ຂໍອວຍພອນໃຫ້ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ຈົ່ງຂຽວສົດງົດງາມ ແລະ ໝັ້ນຄົງທະນົງແກ່ນຕະຫຼອດໄປ.

**2) ເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປປ ລາວ ສົ່ງໂທລະເລກອວຍພອນບຸນປີໃໝ່ປະຈຳຊາດຫວຽດນາມ "ເຕັດບິ່ງເຫງາະ" 2026**

ວັນທີ 13 ກຸມພາ 2026, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປປ ລາວ ໄດ້ສົ່ງໂທລະເລກອວຍພອນ ບຸນປີໃໝ່ປະຈຳຊາດຫວຽດນາມ "ເຕັດບິ່ງເຫງາະ" 2026 ເຖິງ ສະຫາຍ ໂຕ ເລິມ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ໂດຍມີເນື້ອໃນ ດັ່ງນີ້:

ໃນທ່າມກາງບັນຍາກາດທີ່ເຕັມໄປດ້ວຍຄວາມເບີກບານມ່ວນຊື່ນ ທີ່ປະຊາຊົນຫວຽດນາມອ້າຍນ້ອງ ພວມກ້າງ ຫາກະກຽມສະເຫຼີມສະຫຼອງບຸນປີໃໝ່ປະເພນີ (ເຕັດ) ປີມະເມຍ 2026, ຕາງໜ້າ ພັກ, ລັດ, ປະຊາຊົນລາວ ແລະ ໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍສົ່ງຄຳອວຍພອນໄຊອັນປະເສີດ, ຄວາມຢ້ຽມຢາມຖາມຂ່າວອັນອົບອຸ່ນ ແລະ ໄມຕີຈິດມິດຕະພາບ, ຄວາມສາມັກຄີຮັກແພງອັນດູດດື່ມ ມາຍັງ ສະຫາຍ ແລະ ຜ່ານສະຫາຍ ໄປຍັງບັນດາສະຫາຍການນຳພັກ, ລັດ ແລະ ປະຊາຊົນຫວຽດນາມ ອ້າຍນ້ອງທຸກຖ້ວນໜ້າ.

ພັກ, ລັດ ແລະ ປະຊາຊົນລາວ ມີຄວາມຍິນດີ, ພາກພູມໃຈ ຕໍ່ບັນດາຜົນສຳເລັດອັນໃຫຍ່ຫຼວງ, ຮອບດ້ານ ແລະມີຄວາມໝາຍປະຫວັດສາດທີ່ ພັກ, ລັດ ແລະ ປະຊາຊົນຫວຽດນາມ ອ້າຍນ້ອງ ຍາດມາໄດ້ຕະຫຼອດໄລຍະຜ່ານມາ, ພິເສດແມ່ນ ຜົນສຳເລັດອັນສະຫງ່າງາມຂອງ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XIV ຂອງ ພັກກອມມູນິດຫວຽດນາມ ທີ່ເປັນຂີດໝາຍເປີດສູ່ສັງກາດໃໝ່ແຫ່ງການພັດທະນາຢ່າງແຂງແຮງຂອງຫວຽດນາມ. ສິ່ງດັ່ງກ່າວ ເປັນບົດຮຽນອັນລ້ຳຄ່າ ແລະ ເປັນການປຸກລະດົມກຳລັງໃຈອັນໃຫຍ່ຫຼວງໃຫ້ແກ່ ພັກ, ລັດ ແລະ ປະຊາຊົນລາວ ພວກຂ້າພະເຈົ້າ ໃນການພັດທະນາປະເທດຊາດຂອງຕົນ ກ້າວຂຶ້ນຢ່າງແຂງແຮງ.

ຂ້າພະເຈົ້າ ເຊື່ອໝັ້ນວ່າ ພາຍໃຕ້ການນຳພາອັນສະຫຼາດສ່ອງໃສຂອງ ພັກກອມມູນິດຫວຽດນາມ ໂດຍມີ ສະຫາຍເລຂາທິການໃຫຍ່ ໂຕ ເລິມ ເປັນຜູ້ນຳໜ້ານັ້ນ, ປະຊາຊົນຫວຽດນາມ ອ້າຍນ້ອງ ຈະສາມາດບັນລຸບັນດາເປົ້າໝາຍທີ່ກອງປະຊຸມໃຫຍ່ ຄັ້ງທີ XIV ຂອງພັກ ວາງອອກຢ່າງມີໄຊ ເພື່ອສ້າງປະເທດຫວຽດນາມ ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ຮັ່ງມີ, ວັດທະນະຖາວອນ, ສີວິໄລ, ຜາສຸກ ແລະ ກ້າວຂຶ້ນສູ່ສັງຄົມນິຍົມ ຢ່າງໜັກແໜ້ນ.

ຂ້າພະເຈົ້າ ຍັງມີຄວາມຊົງຈຳອັນດີ ແລະ ຕີລາຄາສູງ ຜົນການພົບປະສອງຝ່າຍຂອງພວກເຮົາ ໃນໂອກາດຢ້ຽມຢາມລັດຖະກິດເຊິ່ງກັນ ແລະ ກັນ, ລວມທັງຜົນການພົບປະຜູ້ນຳສູງສຸດ 3 ພັກ ລາວ-ຫວຽດນາມ-ກຳປູເຈຍ ໃນຕົ້ນເດືອນກຸມພາ ຜ່ານມາ ແລະ ຍິນດີສືບຕໍ່ຮ່ວມກັບ ສະຫາຍກໍຄື ການນຳຂັ້ນສູງ ພັກ, ລັດ ຫວຽດນາມ ຊີ້ນຳການຜັນຂະຫຍາຍຜົນການພົບປະດັ່ງກ່າວ ໃຫ້ມີຜົນສຳເລັດເປັນຮູບປະທຳ ເຮັດໃຫ້ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ການເປັນຫຸ້ນສ່ວນຍຸດທະສາດ ລາວ-ຫວຽດນາມ, ຫວຽດ ນາມ-ລາວ ໃຫ້ນັບມື້ນັບກ້າວເຂົ້າສູ່ລວງເລິກ ເພື່ອນຳເອົາຜົນປະໂຫຍດຕົວຈິງ ມາສູ່ປະຊາຊົນສອງຊາດພວກເຮົາ ນັບມື້ນັບຫຼາຍຂຶ້ນ.

ໃນໂອກາດປີໃໝ່ ອັນເປັນສິລິມຸງຄຸນນີ້, ຂ້າພະເຈົ້າ ຂໍອວຍພອນໄຊມາຍັງ ສະຫາຍ ພ້ອມດ້ວຍຄອບຄົວ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມຜາສຸກ ແລະ ປະສົບຜົນສຳເລັດໃນພາລະກິດອັນມີກຽດສູງສົ່ງຂອງ ສະຫາຍ. ຂໍໃຫ້ປີໃໝ່ 2026 ນີ້ ເປັນປີແຫ່ງການເລີ່ມຕົ້ນສັງກາດໃໝ່ ທີ່ນຳເອົາຄວາມສົມບູນພູນສຸກ ແລະ ໄຊຊະນະອັນຍິ່ງໃຫຍ່ມາສູ່ປະຊາຊົນຫວຽດນາມ.

**3) ສອງເລຂາທິການໃຫຍ່, ປະທານປະເທດ ລາວ-ຈີນ ແລກປ່ຽນໂທລະເລກອວຍພອນປີໃໝ່ຈີນ ເຊິ່ງກັນ ແລະ ກັນ**

**ເນື່ອງໃນໂອກາດບຸນປີໃໝ່ຂອງປະຊາຊົນຈີນ ປີມະເມຍ 2026, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ສົ່ງໂທລະເລກອວຍພອນເຖິງ ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາຊົນຈີນ, ເຊິ່ງມີເນື້ອໃນວ່າ:**

ສະຫາຍ ສີ ຈິ້ນຜິງ ທີ່ນັບຖື ແລະ ຮັກແພງ, ເນື່ອງໃນໂອກາດບຸນປີໃໝ່ຈີນ ປີມະເມຍ 2026, ຕາງໜ້າ ພັກ, ລັດ ແລະ ປະຊາຊົນລາວ ກໍຄື ໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍສົ່ງຄຳອວຍພອນອັນປະເສີດມາຍັງ ສະຫາຍ ແລະ ຜ່ານສະຫາຍໄປຍັງ ບັນດາສະຫາຍ ການນຳ ພັກ, ລັດ ແລະ ປະຊາຊົນຈີນທຸກຖ້ວນໜ້າ.

ຂ້າພະເຈົ້າ ມີຄວາມປິຕິຊົມຊື່ນເປັນຢ່າງຍິ່ງ ທີ່ເຫັນວ່າ ພາຍໃຕ້ການນຳພາອັນສະຫຼາດສ່ອງໃສ ແລະ ປະດິດສ້າງ ຂອງ ພັກກອມມູນິດຈີນ, ປະຊາຊົນຈີນອ້າຍນ້ອງ ໄດ້ຜ່ານຜ່າການທົດສອບນາໆປະການ ແລະ ສາມາດຍາດໄດ້ຜົນສຳເລັດອັນສຳຄັນ, ຮອບດ້ານ ແລະ ໜັກແໜ້ນ ໃນການສ້າງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ. ຂ້າພະເຈົ້າ ເຊື່ອໝັ້ນຢ່າງໜັກແໜ້ນວ່າ ພາຍໃຕ້ການນຳພາອັນຖືກຕ້ອງ ຂອງ ພັກກອມມູນິດຈີນ ທີ່ຖື ສະຫາຍເລຂາທິການໃຫຍ່ ສີ ຈິ້ນຜິງ ເປັນແກນກາງນັ້ນ, ປະຊາຊົນຈີນ ຈະສືບຕໍ່ບັນລຸເປົ້າໝາຍໃນການສ້າງສັງຄົມນິຍົມທີ່ທັນສະໄໝຮອບດ້ານ ກໍຄືບັນລຸຄວາມມຸ່ງຫວັງໃນການຟື້ນຟູຄວາມຈະເລີນຮຸ່ງເຮືອງຂອງປະຊາຊາດຈີນ ໃນຕໍ່ໜ້າຢ່າງແນ່ນອນ.

ຂ້າພະເຈົ້າ ມີຄວາມປິຕິຊົມຊື່ນເປັນຢ່າງຍິ່ງທີ່ເຫັນວ່າ ການພົວພັນຮ່ວມມື ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຈີນ ໃນປັດຈຸບັນ ພວມຢູ່ໃນໄລຍະດີທີ່ສຸດໃນປະຫວັດສາດຂອງການພົວພັນລະຫວ່າງສອງຝ່າຍ, ເຊິ່ງໝາກຜົນດັ່ງກ່າວນັ້ນ ເກີດຂຶ້ນໄດ້ຍ້ອນຄວາມໄວ້ເນື້ອເຊື່ອໃຈທາງດ້ານການເມືອງຢ່າງໜັກແໜ້ນ ລະຫວ່າງສອງພັກ ລາວ-ຈີນ ແລະ ຄວາມເອົາໃຈໃສ່ຊີ້ນຳຢ່າງໃກ້ຊິດ ຂອງ ການນຳສູງສຸດ ສອງພັກ, ສອງລັດ ລາວ-ຈີນ ອັນໄດ້ເຮັດໃຫ້ການຮ່ວມມືໄດ້ຮັບການເສີມຂະຫຍາຍຢ່າງຕັ້ງໜ້າ, ເຂົ້າສູ່ລວງເລິກໃນທຸກຂົງເຂດວຽກງານ ແລະ ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ລາວ-ຈີນ.

ປີ 2026 ນີ້ ເປັນປີສ້າງຕັ້ງສາຍພົວພັນທາງການທູດ ສອງປະເທດ ລາວ-ຈີນ ຄົບຮອບ 65 ປີ, ຂ້າພະເຈົ້າ ສະເໜີຖືເອົາກາລະໂອກາດອັນສະຫງ່າລາສີນີ້ ຮ່ວມກັບ ສະຫາຍ ປະກາດເປີດ "ປີມິດຕະພາບ ລາວ-ຈີນ 2026" ເພື່ອສະເຫຼີມສະຫຼອງ ແລະ ຊຸກຍູ້ການຮ່ວມມື ລາວ-ຈີນ ໃນສະພາບການໃໝ່ ໃຫ້ຂະຫຍາຍຕົວຢ່າງຮອບດ້ານ ແລະ ກ້າວເຂົ້າສູ່ລະດັບສູງອັນໃໝ່ຢ່າງບໍ່ຢຸດຢັ້ງ; ຍິນດີສືບຕໍ່ຮ່ວມມືກັບ ສະຫາຍ ຢ່າງໃກ້ຊິດ ເພື່ອນຳພາ-ຊີ້ນຳ ການຈັດຕັ້ງປະຕິບັດບັນດາກິດຈະກຳສະເຫຼີມສະຫຼອງປີມິດຕະພາບດັ່ງກ່າວ ໃຫ້ມີເນື້ອໃນເລິກເຊິ່ງ, ໜັກແໜ້ນ ແລະ ມີບັນຍາກາດຟົດຟື້ນ, ປະກອບສ່ວນເຂົ້າໃນການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ, ຈີນ-ລາວ ໃຫ້ມີມາດຕະຖານສູງ, ຄຸນນະພາບສູງ ແລະ ລະດັບທີ່ສູງກວ່າເກົ່າ ເພື່ອປະກອບສ່ວນເຂົ້າໃນການສ້າງປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ ກໍຄື ເພື່ອປົກປັກຮັກສາສັນຕິພາບ, ສະຖຽນລະພາບ, ຄວາມຍຸຕິທຳ ແລະ ການຮ່ວມມືເພື່ອການພັດທະນາ ໃນພາກພື້ນ ແລະ ໃນໂລກ.

ຂ້າພະເຈົ້າ ຂໍຖືໂອກາດອັນເປັນສິລິມຸງຄຸນນີ້ ອວຍພອນໄຊອັນປະເສີດມາຍັງ ສະຫາຍ ພ້ອມດ້ວຍ ຄອບຄົວ ຈົ່ງມີພະລານາໄມສົມບູນ, ມີຄວາມຜາສຸກ ແລະ ປະສົບຜົນສຳເລັດໃໝ່ໃຫຍ່ຫຼວງກວ່າເກົ່າ ໃນພາລະກິດອັນມີກຽດສູງສົ່ງຂອງສະຫາຍ ແລະ ຂໍອວຍພອນໃຫ້ປະຊາຊົນຈີນ ຈົ່ງຕ້ອນຮັບປີໃໝ່ດ້ວຍຄວາມເບີກບານມ່ວນຊື່ນ, ມີຄວາມສົມບູນພູນສຸກ ແລະ ຈະເລີນຮຸ່ງເຮືອງຕະຫຼອດໄປ.

ຂໍອວຍພອນໃຫ້ສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ຄູ່ຮ່ວມຍຸດທະສາດ ຮອບດ້ານ ໝັ້ນຄົງ ຍາວນານຕາມທິດ 4 ດີ ແລະ ການເປັນຄູ່ຮ່ວມຊາຕາກຳ ລາວ-ຈີນ ຈົ່ງແຕກດອກອອກຜົນຍິ່ງໆຂຶ້ນ.

**ໃນໂອກາດດຽວກັນ, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາຊົນຈີນ ກໍໄດ້ສົ່ງໂທລະເລກຕອບຂອບໃຈ, ເຊິ່ງມີເນື້ອໃນວ່າ:** ສະຫາຍເລຂາທິການໃຫຍ່ ປະທານປະເທດ ທີ່ນັບຖື, ຂອບໃຈ ສະຫາຍ ທີ່ໄດ້ສົ່ງສານອວຍພອນປີໃໝ່ເນື່ອງໃນໂອກາດບຸນກຸດຈີນ ປີ 2026 ທີ່ຈະມາເຖິງນີ້. ປີ 2026 ແມ່ນປີທີ່ປະເທດຈີນ ແລະ ປະເທດລາວ ໄດ້ສ້າງສາຍພົວພັນທາງການທູດ

ຄົບຮອບ 65 ປີ, ຂ້າພະເຈົ້າຍິນດີທີ່ຈະຮ່ວມກັບ ສະຫາຍ ປະກາດປີ 2026 ເປັນປີມິດຕະພາບຈີນ-ລາວ ແລະ ໃຫ້ບັນດາຂະແໜງການຂອງສອງປະເທດ ຮ່ວມກັນຈັດກິດຈະກຳສະເຫຼີມສະຫຼອງຕ່າງໆ ເພື່ອເພີ່ມພະລັງໃໝ່ເຂົ້າໃນການກໍ່ສ້າງຄູ່ຮ່ວມຊາຕາກຳ ຈີນ-ລາວ.

ປະເທດຈີນ ແລະ ປະເທດລາວ ເປັນບ້ານໃກ້ເຮືອນຄຽງທີ່ດີ, ເພື່ອນມິດທີ່ດີ ທີ່ມີສາຍພູສາຍນ້ຳຕິດຈອດກັນ ແລະ ມີມິດຕະພາບມູນເຊື້ອມາແຕ່ບູຮານນະການ ທັງເປັນສະຫາຍທີ່ດີ ແລະ ຄູ່ຮ່ວມມືທີ່ດີ ທີ່ຮ່ວມອຸດົມການ ແລະ ຊາຕາກຳອັນດຽວກັນ. ໃນຊຸມປີທີ່ຜ່ານມາ, ສອງຝ່າຍໄດ້ຮ່ວມກັນສະແຫວງຫາການພັດທະນາ ດ້ວຍການຮ່ວມມືທີ່ຕ່າງຝ່າຍຕ່າງມີຜົນປະໂຫຍດ, ຜ່ານຜ່າສິ່ງທ້າທາຍ ດ້ວຍຄວາມສາມັກຄີຊ່ວຍເຫຼືອກັນ ແລະ ໃຫ້ການສະໜັບສະໜູນເຊິ່ງກັນແລະກັນ ຢ່າງເດັດດ່ຽວໃນບັນຫາທີ່ກ່ຽວພັນກັບຜົນປະໂຫຍດແກນກາງຂອງກັນແລະກັນ, ເຊິ່ງໄດ້ນຳເອົາຄວາມຜາສຸກອັນແທ້ຈິງມາຍັງປະຊາຊົນທັງສອງຊາດ. ຂ້າພະເຈົ້າ ໄດ້ພົບປະກັບ ສະຫາຍ ຫຼາຍຄັ້ງ, ເຊິ່ງໄດ້ບັນລຸຄວາມຮັບຮູ້ອັນສຳຄັນທີ່ເປັນເອກະພາບກັນ ໃນການລົງເລິກການກໍ່ສ້າງຄູ່ຮ່ວມຊາຕາກຳ ຈີນ-ລາວ ແລະ ໄດ້ສ້າງແຜນງານອັນຍິ່ງໃຫຍ່ໃຫ້ແກ່ການພັດທະນາສາຍພົວພັນສອງພັກ, ສອງລັດ ໃນສະພາບການໃໝ່.

ປີໃໝ່ຟ້າໃໝ່, ສາຍພົວພັນ ຈີນ-ລາວ ກຳລັງຢູ່ໃນໄລຍະດີທີ່ສຸດໃນປະຫວັດສາດ ແລະ ກຳລັງຈະກ້າວໄປສູ່ອະນາຄົດແຫ່ງການພັດທະນາທີ່ກວ້າງຂວາງ, ຝ່າຍຈີນ ຍາມໃດກໍຖືສຳຄັນຕໍ່ສາຍພົວພັນ ຈີນ-ລາວ ຈາກມຸມມອງຍຸດທະສາດ ແລະ ຍາວນານ, ຍິນດີຮ່ວມກັບຝ່າຍລາວ ຖືເອົາການສະເຫຼີມສະຫຼອງສອງປະເທດ ຈີນ-ລາວ ສ້າງຕັ້ງສາຍພົວພັນທາງການທູດ ຄົບຮອບ 65 ປີ ແລະ ປີມິດຕະພາບຈີນ-ລາວ ເປັນໂອກາດ, ເພີ່ມພູນຄູນສ້າງມິດຕະພາບອັນເປັນມູນເຊື້ອ, ລົງເລິກການຮ່ວມມືທີ່ເປັນຮູບປະທຳ, ເພີ່ມທະວີການປະສານງານທາງດ້ານຍຸດທະສາດ, ຊຸກຍູ້ການສ້າງຄູ່ຮ່ວມຊາຕາກຳ ຈີນ-ລາວ ໃຫ້ກ້າວສູ່ແຖວໜ້າຂອງສາຍພົວພັນ ລະຫວ່າງ ປະເທດ ແລະ ປະກອບສ່ວນອັນໃຫຍ່ຫຼວງກວ່າເກົ່າເຂົ້າໃນການຊຸກຍູ້ ສັນຕິພາບ, ສະຖຽນລະພາບ, ການພັດທະນາ ແລະ ຄວາມຮຸ່ງເຮືອງຂອງພາກພື້ນ. ຂໍອວຍພອນໃຫ້ ສະຫາຍ ຈົ່ງໂຊກດີປີໃໝ່, ມີຄວາມສີລິມຸ່ງຄຸນໃນປີມະເມຍ ນີ້.

ຂໍອວຍພອນໃຫ້ປະເທດລາວ ຈົ່ງມີຄວາມຈະເລີນຮຸ່ງເຮືອງ, ປະຊາຊົນ ຮັ່ງມີຜາສຸກ.

ຂໍອວຍພອນໃຫ້ ປີມິດຕະພາບ ຈີນ-ລາວ ປະສົບຜົນສຳເລັດຢ່າງຈົບງາມ.

**4) ສະຫາຍເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ສົ່ງໂທລະເລກຊົມເຊີຍເຖິງ ສະຫາຍເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກແຮງງານເກົາຫຼີ ສະໄໝທີ IX.**

ໃນວັນທີ 23 ກຸມພາ 2026, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ສົ່ງໂທລະເລກຊົມເຊີຍ ເຖິງ ສະຫາຍ ກິມ ເຈີງ ອຸນ ໃນໂອກາດທີ່ໄດ້ຮັບເລືອກຕັ້ງດຳລົງຕຳແໜ່ງເປັນ ເລຂາທິການໃຫຍ່ ພັກແຮງງານເກົາຫຼີ ສະໄໝທີ IX ອີກໜຶ່ງສະໄໝ ຊຶ່ງມີເນື້ອໃນດັ່ງນີ້:

ຕາງໜ້າຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ສະມາຊິກພັກ, ປະຊາຊົນລາວ ແລະ ໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍສົ່ງຄວາມຊົມເຊີຍອັນອົບອຸ່ນ ແລະ ພອນໄຊອັນປະເສີດ ມາຍັງ ສະຫາຍ ເນື່ອງໃນໂອກາດທີ່ສະຫາຍ ໄດ້ຮັບເລືອກຕັ້ງໃຫ້ດຳລົງຕຳແໜ່ງເປັນ ເລຂາທິການໃຫຍ່ ພັກແຮງງານເກົາຫຼີ ອີກໜຶ່ງສະໄໝ ໃນກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກແຮງງານເກົາຫຼີ, ເຊິ່ງເປັນການສະແດງເຖິງຄວາມເຊື່ອໝັ້ນ ແລະ ໄວ້ວາງໃຈ ຂອງທົ່ວພັກ, ທົ່ວລັດ, ທົ່ວກອງທັບ ແລະ ທົ່ວປວງຊົນ ສປປ ເກົາຫຼີ ທີ່ມີຕໍ່ ສະຫາຍ.

ຂ້າພະເຈົ້າ ເຊື່ອໝັ້ນຢ່າງໜັກແໜ້ນວ່າ ພາຍໃຕ້ການນຳພາອັນເດັດດ່ຽວ ແລະ ຖືກຕ້ອງ ຂອງພັກແຮງງານເກົາຫຼີອັນມີ ສະຫາຍ ເປັນຜູ້ນຳນັ້ນ, ປະຊາຊົນ ສປປ ເກົາຫຼີ ອ້າຍນ້ອງ ຈະສືບຕໍ່ຍາດໄດ້ຜົນສຳເລັດໃໝ່ໃຫຍ່ຫຼວງກວ່າເກົ່າ, ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກແຮງງານເກົາຫຼີ ຢ່າງມີໄຊ ແລະ ສ້າງສາປະເທດ ສປປ ເກົາຫຼີ ສັງຄົມນິຍົມໃຫ້ເຂັ້ມແຂງ, ໃຫ້ຈະເລີນຮຸ່ງເຮືອງ ຕາມຈຸດໝາຍທີ່ວາງໄວ້.

ຂ້າພະເຈົ້າ ຍິນດີສືບຕໍ່ເຮັດວຽກຢ່າງໃກ້ຊິດກັບ ສະຫາຍ ເພື່ອເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ, ຄວາມສາມັກຄີ ແລະ ການຮ່ວມມືອັນເປັນມູນເຊື້ອທີ່ຍາວນານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດພວກເຮົາ ໃຫ້ແຕກດອກອອກຜົນຍິ່ງໆຂຶ້ນ ເພື່ອນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນລາວ ແລະ ສປປ ເກົາຫຼີ ກໍຄື ເພື່ອປະກອບສ່ວນເຂົ້າໃນການເສີມສ້າງສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມື ເພື່ອການພັດທະນາ ຢູ່ໃນພາກພື້ນ ແລະ ໃນໂລກ.

**5) ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ສົ່ງສານອວຍພອນ ກອງປະຊຸມໃຫຍ່ ຄັ້ງທີ IX ຂອງ ພັກແຮງງານເກົາຫຼີ**

ໃນວັນທີ 20 ກຸມພາ 2026, ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ໄດ້ສົ່ງສານອວຍພອນກອງປະຊຸມໃຫຍ່ ຄັ້ງທີ IX ຂອງ ພັກແຮງງານເກົາຫຼີ ຊຶ່ງມີເນື້ອໃນດັ່ງນີ້:

ໃນນາມ ຄະນະບໍລິຫານງານສູນກາງພັກ ປະຊາຊົນປະຕິວັດລາວ, ສະມາຊິກພັກ ແລະ ປະຊາຊົນລາວບັນດາເຜົ່າ, ພວກຂ້າພະເຈົ້າ ຂໍສົ່ງຄວາມຊົມເຊີຍອັນອົບອຸ່ນ ແລະ ອວຍພອນໄຊອັນປະເສີດ ມາຍັງ ພັກແຮງງານເກົາຫຼີ, ບັນດາການນຳພັກ, ບັນດາຜູ້ແທນກອງປະຊຸມໃຫຍ່ ແລະ ສະມາຊິກພັກ ທຸກຖ້ວນໜ້າ ໃນໂອກາດທີ່ ພັກແຮງງານເກົາຫຼີ ໄຂກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ IX ຂຶ້ນ ຢ່າງສະງ່າຜ່າເຜີຍ.

ກອງປະຊຸມໃຫຍ່ ຄັ້ງທີ IX ຂອງ ພັກແຮງງານເກົາຫຼີ ຄັ້ງນີ້ ເປັນເຫດການການເມືອງທີ່ມີຄວາມໝາຍສຳຄັນຂອງທົ່ວພັກ, ທົ່ວລັດ, ທົ່ວປວງຊົນ ແລະ ທົ່ວກອງທັບ ສປປ ເກົາຫຼີ, ເປັນຂີດສຳຄັນ ແຫ່ງການເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງຂອງພັກແຮງງານເກົາຫຼີ, ເຊິ່ງຈະໄດ້ໄຂຂຶ້ນໃນທ່າມກາງສະພາບການຂອງພາກພື້ນ ແລະ ສາກົນ ທີ່ຍັງສືບຕໍ່ສັບສົນ, ຫຍຸ້ງຍາກ ແລະ ຜັນແປໄປຢ່າງສະຫຼັບສັບຊ້ອນ. ພວກຂ້າພະເຈົ້າ ມີຄວາມເຊື່ອໝັ້ນຢ່າງໜັກແໜ້ນວ່າ ກອງປະຊຸມຄັ້ງນີ້ ຂອງບັນດາສະຫາຍ ຈະດຳເນີນໄປດ້ວຍຜົນສຳເລັດຢ່າງຈົບງາມຕາມແຜນທີ່ວາງໄວ້ ເພື່ອກຳນົດວິໄສທັດ, ວາງນະໂຍບາຍ ແລະ ຍຸດທະສາດຂອງພັກ ເພື່ອສືບຕໍ່ ນຳພາພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາ ສປປ ເກົາຫຼີ ສັງຄົມນິຍົມ ໃຫ້ນັບມື້ນັບຮັ່ງມີເຂັ້ມແຂງ ເພື່ອນຳເອົາຄວາມສົມບູນພູນສຸກມາສູ່ປະຊາຊົນ ສປປ ເກົາຫຼີ, ທັງເປັນການຍົກສູງບົດບາດ ແລະ ອິດທິພົນຂອງພັກ ໃນເວທີການເມືອງພາຍໃນ ແລະ ສາກົນ.

ໃນໂອກາດທີ່ມີຄວາມໝາຍສຳຄັນນີ້, ພວກຂ້າພະເຈົ້າ ຂໍອວຍພອນໃຫ້ ກອງປະຊຸມໃຫຍ່ ຄັ້ງທີ IX ຂອງ ພັກແຮງງານເກົາຫຼີ ຈົ່ງປະສົບຜົນສຳເລັດຢ່າງສະຫງ່າງາມ. ຂໍອວຍພອນໃຫ້ ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອ ທີ່ມີມາແຕ່ດົນນານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ສປປ ລາວ ແລະ ສປປ ເກົາຫຼີ ຈົ່ງໝັ້ນຄົງທະນົງແກ່ນຕະຫຼອດການະນານ.

## III. ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ

### 1) ກອງປະຊຸມທາບທາມສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ຂັ້ນຄະນະພົວພັນຕ່າງປະເທດສູນກາງພັກ




ວັນທີ 17 ກຸມພາ 2026, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ເປີດກອງປະຊຸມທາບທາມພະນັກງານນຳພາ-ຄຸ້ມຄອງຂອງຄະນະພົວພັນຕ່າງປະເທດສູນກາງພັກ ຄຸ້ມຄອງ ຮອບທີ 1, ໂດຍການເປັນປະທານຂອງ ສະຫາຍ ບຸນເຫຼືອ ພັນດານຸວົງ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ເຊິ່ງມີ ຄະນະພັກ-ຄະນະນຳ, ຄະນະໜ່ວຍພັກ, ຄະນະກົມ, ພະນັກງານສະມາຊິກພັກບຳນານ, ຄະນະພະແນກ ແລະ ພະນັກງານຂອງ ຄຕພ ເຂົ້າຮ່ວມ.

ໃນກອງປະຊຸມ, ສະຫາຍ ປອ ວາລະໄຊ ເລັ່ງສະຫວັດ, ກຳມະການສຳຮອງສູນກາງພັກ, ຮອງເລຂາຄະນະພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຂຶ້ນຜ່ານມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 030, 032/ກມສພ, ບົດແນະນຳ ສະບັບເລກທີ 292/ຄຈສພ ວ່າດ້ວຍ ມາດຕະຖານຂອງພະນັກງານ ແລະ ສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ, ແລະ ດຳລັດ 461/ລບ ວ່າດ້ວຍມາດຕະຖານຕຳແໜ່ງບໍລິຫານຂອງລັດຖະກອນແຫ່ງ ສປປ ລາວ ເຊິ່ງໄດ້ເນັ້ນໃຫ້ເຫັນເຖິງບັນດາມາດຖານ-ເງື່ອນໄຂຂອງແຕ່ລະຕຳແໜ່ງງານ, ຍົກໃຫ້ເຫັນເຖິງຄວາມໝາຍ, ຄວາມສຳຄັນຂອງການສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ເປັນວຽກງານໜຶ່ງທີ່ສຳຄັນພື້ນຖານຂອງວຽກງານພະນັກງານ ເພື່ອເປັນບ່ອນອີງ ທັງຍັງເປັນການຄາດຄະເນເປົ້າໝາຍຈັດວາງພະນັກງານເຂົ້າໃນຕຳແໜ່ງງານນຳພາ-ຄຸ້ມຄອງແຕ່ລະຂັ້ນ, ແນໃສ່ຮັບປະກັນລັກສະນະສືບທອດປ່ຽນແທນຕໍ່ເນື່ອງສະເພາະໜ້າ ແລະ ຍາວນານ, ຕອບສະໜອງໄດ້ທາງດ້ານຈຳນວນ, ຄຸນນະພາບ ແລະ ໂຄງປະກອບບຸກຄະລາກອນຄົບຊຸດ ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນຕໍ່ໜ້າ.

### 2) ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າອວຍພອນ ສະຖານເອກອັກຄະລັດຖະທູດ ແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ







ເນື່ອງໃນໂອກາດ ວັນສ້າງຕັ້ງພັກກອມມູນິດຫວຽດນາມ ຄົບຮອບ 96 ປີ (3 ກຸມພາ 1930 - 3 ກຸມພາ 2026); ວັນທີ 03 ກຸມພາ 2026, ສະຫາຍ ບຸນເຫຼືອ ພັນດານຸວົງ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄະນະ ໄດ້ເຂົ້າອວຍພອນ ສະຫາຍ ຫງວຽນ ມິງ ເຕິມ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ ພ້ອມດ້ວຍພະນັກງານສະຖານທູດ.

ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ບັນດາຜົນສຳເລັດອັນໃຫຍ່ຫຼວງ ແລະ ຮອບດ້ານ ທີ່ ປະຊາຊົນຫວຽດນາມອ້າຍນ້ອງ ຍາດມາໄດ້ພາຍໃຕ້ການນຳພາອັນຖືກຕ້ອງ ແລະ ສະຫຼາດສ່ອງໃສ ຂອງ ພັກກອມມູນິດຫວຽດນາມ ຕະຫຼອດໄລຍະ 96 ປີຜ່ານມາ, ເຮັດໃຫ້ ສສ ຫວຽດນາມ ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີຄວາມເຂັ້ມແຂງ, ເສດຖະກິດຂະຫຍາຍຕົວໃນລະດັບສູງຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການຍົກສູງຂຶ້ນເປັນກ້າວໆ, ບົດບາດ ແລະ ອິດທິ

ພົນຂອງ ພັກ, ລັດ ຫວຽດນາມ ນັບມື້ເພີ່ມທະວີ ແລະ ສູງເດັ່ນຂຶ້ນ ໃນເວທີພາກພື້ນ ແລະ ສາກົນ. ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມພາກພູມໃຈເປັນຢ່າງຍິ່ງ ທີ່ເຫັນວ່າ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ລາວ-ຫວຽດນາມ ສືບຕໍ່ໄດ້ຮັບການເສີມຂະຫຍາຍຢ່າງຕັ້ງໜ້າ, ນັບມື້ກ້າວເຂົ້າສູ່ລວງເລິກ ໃນທຸກຂົງເຂດວຽກງານ-ຂະແໜງການ ແລະ ໄດ້ນຳເອົາຜົນປະໂຫຍດຕົວຈິງ ມາສູ່ປະຊາຊົນສອງຊາດ ລາວ ແລະ ຫວຽດນາມ.

ຈາກນັ້ນ, ສະຫາຍ ເອກອັກຄະລັດຖະທູດ ຫງວຽນ ມິງ ເຕິມ ໄດ້ສະແດງຄວາມຂອບໃຈ ຕໍ່ ສະຫາຍ ບຸນເຫຼືອ ພັນດານຸວົງ ທີ່ໄດ້ນຳພາຄະນະ ມາອວຍພອນໃນຄັ້ງນີ້, ພ້ອມທັງຕີລາຄາສູງ ຕໍ່ການພົວພັນຮ່ວມມືພິເສດ ລາວ-ຫວຽດນາມ ທີ່ຫາກໍໄດ້ຍົກຂຶ້ນສູ່ລະດັບສູງໃໝ່ ເປັນຫຸ້ນສ່ວນຍຸດທະສາດ ແລະ ນັບມື້ເຂົ້າສູ່ລວງເລິກ ຢ່າງບໍ່ຢຸດຢັ້ງ; ຊົມເຊີຍການປະ ສານສົມທົບຢ່າງແໜ້ນແຟ້ນ ລະຫວ່າງ ສະຖານທູດຫວຽດນາມ ແລະ ຄະນະພົວພັນຕ່າງປະເທດສູນກາງ ພັກ ປປ ລາວ ໃນການເປັນຂົວເຊື່ອມຕໍ່ ແລະ ການເປັນເສນາທິການໃຫ້ແກ່ສອງພັກ, ສອງລັດ ລາວ-ຫວຽດນາມ ໃນການເພີ່ມທະວີການພົວພັນຮ່ວມມືສອງຝ່າຍ, ໂດຍສະເພາະ ການປະກອບສ່ວນເຂົ້າໃນຜົນສຳເລັດການຢ້ຽມຢາມລັດຖະກິດ ສສ ຫວຽດນາມ ຂອງ ສະຫາຍເລຂາທິການໃຫຍ່, ປະທານປະເທດ ສປປ ລາວ ພ້ອມດ້ວຍພັນລະຍາ ແລະ ຄະນະຜູ້ແທນຂັ້ນສູງ ພັກ, ລັດ ສປປ ລາວ ໃນທ້າຍເດືອນຜ່ານມາ, ພ້ອມທັງໄດ້ເອກະພາບກັນໃນການສຸມໃສ່ກະກຽມຄວາມພ້ອມຮອບດ້ານ ໃຫ້ແກ່ການຢ້ຽມຢາມລັດຖະກິດ ສປປ ລາວ ຂອງ ສະຫາຍເລຂາທິການໃຫຍ່ ໂຕ ເລີມ ໃນຕໍ່ໜ້ານີ້, ອັນໄດ້ເປັນການປະກອບສ່ວນເຂົ້າໃນການເພີ່ມພູນຄູນສ້າງ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ລາວ-ຫວຽດນາມ

### 3) ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ເອກອັກຄະລັດຖະທູດສິງກະໂປ



ວັນທີ 24 ກຸມພາ 2026, ທີ່ຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ບຸນເຫຼືອ ພັນດານຸວົງ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ທ່ານ ອອງ ຊິວ ເກ (Ong Siew Gay), ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສາທາລະນະລັດສິງກະໂປ ປະຈຳ ສປປ ລາວ.

ໃນໂອກາດດັ່ງກ່າວ, ສະຫາຍ ຫົວໜ້າ ຄຕພ ໄດ້ສະແດງຄວາມຍິນດີ ແລະ ຊົມເຊີຍ ຕໍ່ທ່ານເອກອັກຄະລັດຖະທູດສິງກະໂປ ທີ່ໄດ້ຮັບການແຕ່ງຕັ້ງໃຫ້ມາປະຕິບັດໜ້າທີ່ວຽກງານການທູດ ຢູ່ ສປປ ລາວ ແລະ ສະແດງຄວາມເຊື່ອໝັ້ນວ່າ ທ່ານເອກອັກຄະລັດຖະທູດ ຈະສືບຕໍ່ໃຫ້ການຮ່ວມມື ແລະ ປະສານສົມທົບຢ່າງແໜ້ນແຟ້ນກັບພາກສ່ວນກ່ຽວຂ້ອງຂອງ ສປປ ລາວ ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ລາວ-ສິງກະໂປ ໃຫ້ນັບມື້ນັບຂະຫຍາຍຕົວ ແລະ ມີໝາກຜົນຍິ່ງໆຂຶ້ນ, ເພື່ອນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນ ສອງຊາດ ແລະ ສ້າງຄວາມເຂັ້ມແຂງໃຫ້ອາຊຽນ.

ທ່ານເອກອັກຄະລັດຖະທູດ ໄດ້ສະແດງຄວາມຂອບໃຈ ເປັນຢ່າງສູງ ທີ່ໄດ້ມີໂອກາດເຂົ້າຢ້ຽມຂໍ່ານັບ ສະຫາຍຫົວໜ້າ ຄຕພ ແລະ ໄດ້ສະແດງຄວາມຊົມເຊີຍຕໍ່ ສະຫາຍ ຫົວໜ້າ ຄຕພ ທີ່ໄດ້ຮັບການເລືອກຕັ້ງເປັນ ກຳມະການສູນກາງພັກ ໃນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງ ພັກປະຊາຊົນ ປະຕິວັດ ລາວ; ທ່ານເອກອັກຄະລັດຖະທູດ ໄດ້ໃຫ້ຄຳໝັ້ນສັນຍາຈະເຮັດສຸດຄວາມສາມາດຂອງຕົນ ໃນການເສີມຂະຫຍາຍສາຍພົວພັນມິດຕະພາບລະຫວ່າງ ສິງກະໂປ-ລາວ ໃຫ້ນັບມື້ແຕກດອກອອກຜົນຍິ່ງໆຂຶ້ນ.

ສອງຝ່າຍ ຍິນດີປະສານສົມທົບ ແລະ ຊຸກຍູ້ການພົວພັນຮ່ວມມືດ້ານເສດຖະກິດ, ການຄ້າ, ການລົງທຶນ, ການສ້າງຊັບພະຍາກອນມະນຸດ ແລະ ອື່ນໆ, ລວມທັງການປະສານສົມທົບໃນຂອບອາຊຽນ, ຫຼາຍຝ່າຍ ໃນພາກພື້ນ ແລະ ໃນໂລກ ເພື່ອສ້າງຄວາມເຂັ້ມແຂງຮອບດ້ານໃຫ້ແກ່ປະຊາຄົມອາຊຽນ.

**4) ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບ ເອກອັກຄະລັດຖະທູດ ອາແຊັກໄບຊານ**




ວັນທີ 18 ກຸມພາ 2026, ທີ່ຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ວາລະໄຊ ເລັ່ງສະຫວັດ, ກຳມະການສຳຮອງສູນກາງພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ໂຊບກີ ເມດິຊາເດ (Shovgi Mehdazadé), ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສາທາລະນະລັດອາແຊັກໄບຊານ ປະຈຳ ສປປ ລາວ ທີ່ມີສຳນັກງານຕັ້ງຢູ່ ນະຄອນຫຼວງຮ່າໂນ້ຍ, ສສ.ຫວຽດນາມ.

ໃນໂອກາດນີ້, ທ່ານ ວາລະໄຊ ເລັ່ງສະຫວັດ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ ການເດີນທາງມາເຄື່ອນໄຫວທີ່ ສປປ ລາວ ຂອງທ່ານ ໂຊບກີ ເມດິຊາເດ, ເຊິ່ງເປັນການປະກອບສ່ວນຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອ ທີ່ມີມາແຕ່ຍາວນານ ລະຫວ່າງ ສປປ ລາວ ແລະ ສ.ອາແຊັກໄບຊານ ກໍຄື ລະຫວ່າງ ພັກ ປປ ລາວ ແລະ ພັກອາແຊັກໄບຊານໃໝ່ ໃຫ້ແໜ້ນແຟ້ນ ແລະ ເລິກເຊິ່ງຍິ່ງຂຶ້ນ. ໃນການພົບປະ, ທ່ານຮອງຫົວໜ້າ ຄຕພ ໄດ້ສະແດງຄວາມຮູ້ບຸນຄຸນຕໍ່ການຊ່ວຍເຫຼືອອັນລ້ຳຄ່າຂອງ ພັກ, ລັດ ແລະ ປະຊາຊົນອາແຊັກໄບຊານ ທີ່ມີຕໍ່ ສປປ ລາວ ຕັ້ງແຕ່ສະໄໝອະດີດ ກໍຄືໃນໄລຍະປັດຈຸບັນ; ສະແດງຄວາມຂອບໃຈຜ່ານທ່ານທູດ ໄປຍັງ ພະນະທ່ານ ຕາຄິຣ ບູດາກົບ, ຮອງປະທານພັກອາແຊັກໄບຊານໃໝ່ ທີ່ໄດ້ສົ່ງສານຊົມເຊີຍຜົນສຳເລັດຂອງ ກອງປະຊຸມໃຫຍ່ ຄັ້ງທີ XII ຂອງ ພັກ ປປ ລາວ. ພ້ອມກັນນີ້, ຍັງໄດ້ປຶກສາຫາລືຢ່າງກົງໄປກົງມາໃນຫຼາຍບັນຫາ ໂດຍສະເພາະ ແຜນການຮ່ວມມື ລະຫວ່າງ ສອງພັກກຳອຳນາດ ກໍຄື ການກະກຽມໃຫ້ແກ່ການຢ້ຽມຢາມລາວຂອງ ຄະນະຜູ້ແທນຂັ້ນສູງຂອງ ພັກອາແຊັກໄບຊານໃໝ່, ບົດຮຽນການພັດທະນາເສດຖະກິດ-ສັງຄົມໂດຍຜ່ານການນຳພາຂອງພັກ, ການໄປມາຫາສູ່ ລະຫວ່າງ ປະຊາຊົນສອງຊາດ ກໍຄື ວຽກງານສະມາຄົມມິດຕະພາບ ແລະ ບັນດາທ່າແຮງທີ່ສອງຝ່າຍ ສາມາດຮ່ວມມືກັນໃນຕໍ່ໜ້າ, ເຊິ່ງຝ່າຍລາວ ຈະໄດ້ເຮັດວຽກຢ່າງຫ້າວຫັນຮ່ວມກັບສະຖານທູດອາແຊັກໄບຊານ ເພື່ອຊຸກຍູ້ການພົວພັນຮ່ວມມືໃຫ້ມີບາດກ້າວໃໝ່.

ທ່ານ ໂຊບກີ ເມດິຊາເດ ໄດ້ສະແດງຄວາມຂອບໃຈ ແລະ ຮູ້ສຶກເປັນກຽດຢ່າງສູງທີ່ໄດ້ພົບປະກັບ ທ່ານຮອງຫົວໜ້າ ຄຕພ ໂດຍໄດ້ແຈ້ງໃຫ້ຊາບໂດຍຫຍໍ້ກ່ຽວກັບ ການເຄື່ອນໄຫວຂອງທ່ານທູດ ໃນໄລຍະຢ້ຽມຢາມລາວ ເຊິ່ງໄດ້ພົບປະເຮັດວຽກກັບຫຼາຍພາກສ່ວນ, ຕີລາຄາສູງ ແລະ ສະແດງຄວາມຂອບໃຈຕໍ່ ບັນດາອະດີດນັກສຶກສາລາວ ທີ່ຈົບຈາກ ສ.ອາແຊັກໄບຊານ ທີ່ໄດ້ເຄື່ອນໄຫວຢ່າງຫ້າວຫັນໃນການໂຄສະນາເຜີຍແຜ່ກ່ຽວກັບ ສປປ ລາວ ແລະ ສ.ອາແຊັກໄບຊານ ໃຫ້ເປັນທີ່ຮູ້ຈັກ, ແຈ້ງໃຫ້ຊາບກ່ຽວກັບ ໂຄງການແລກປ່ຽນຄະນະຜູ້ແທນອະດີດນັກສຶກສາລາວ ທີ່ຈົບຈາກ ອາແຊັກໄບຊານ, ການມອບທຶນການສຶກສາ ຈຳນວນ 3 ທຶນໃຫ້ແກ່ ສປປ ລາວ ໃນປີ 2026 ນີ້. ພ້ອມດຽວກັນນີ້, ທ່ານທູດ ຍັງໄດ້ຍົກໃຫ້ເຫັນວ່າ ການນຳຂອງອາແຊັກໄບຊານ ໄດ້ໃຫ້ຄວາມສຳຄັນຕໍ່ການພົວພັນ ແລະ ຮ່ວມມືກັບ ສປປ ລາວ ທີ່ມີມູນເຊື້ອມາແຕ່ດົນນານ. ພ້ອມນີ້, ການນຳພັກອາແຊັກໄບຊານໃໝ່ ກໍໄດ້ຕີລາຄາສູງຕໍ່ການພົວພັນກັບ ພັກ ປປ ລາວ, ຊຶ່ງໄດ້ແຈ້ງແຜນການຈະມາຢ້ຽມຢາມ ສປປ ລາວ ໃນລະຫວ່າງກາງປີ 2026. ທ່ານ ໂຊບກີ ເມດິຊາເດ ຍັງໄດ້ສະເໜີໃຫ້ມີການຮ່ວມມືດ້ານຂໍ້ມູນຂ່າວສານ, ວຽກງານ ປກສ ແລະ ຂົງເຂດອື່ນໆທີ່ 2 ຝ່າຍມີທ່າແຮງນຳກັນ ແລະ ຍັງໄດ້ເຊື້ອເຊີນພາກສ່ວນກ່ຽວຂ້ອງຂອງລາວ ເຂົ້າຮ່ວມກິດຈະກຳຕ່າງໆ ທີ່ຈະຈັດຂຶ້ນຢູ່ອາແຊັກໄບຊານ ໃນປີ 2026.

## IV. ການເຄື່ອນໄຫວຂອງ ວຽກງານການທູດປະຊາຊົນ

### 1) ສະມາຄົມມິດຕະພາບ ລາວ-ສປປ ເກົາຫຼີ ຈັດພິທີປາຖະກະຖາ ເນື່ອງໃນໂອກາດວັນຄ້າຍວັນເກີດຂອງປະທານ ກິມ ເຈິງ ອຶນ ຄົບຮອບ 84 ປີ (16/2/1942 - 16/2/2026)





ວັນທີ 09 ກຸມພາ 2026, ທີ່ຫ້ອງວ່າການປົກຄອງແຂວງອຸດົມໄຊ, ສະມາຄົມມິດຕະພາບ ລາວ-ສປປ ເກົາຫຼີ ແລະ ສະຖານເອກອັກຄະລັດຖະທູດແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ ໄດ້ຈັດພິທີປາຖະກະຖາ ເນື່ອງໃນໂອກາດວັນຄ້າຍວັນເກີດຂອງປະທານ ກິມ ເຈິງ ອຶນ ຄົບຮອບ 84 ປີ (16 ກຸມພາ 1942 – 16 ກຸມພາ 2026). ໃນພິທີ ໄດ້ມີການວາງ ສະແດງຮູບພາບ, ສະແດງສິລະປະ (ລາວ ແລະ ສປປ ເກົາຫຼີ), ປຶ້ມ ແລະ ສາຍວີດີໂອ ກ່ຽວກັບ ການພັດທະນາເສດຖະ ກິດ-ສັງຄົມ, ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ສປປ ເກົາຫຼີ ໃນໄລຍະຜ່ານມາ ແລະ ປັດຈຸ ບັນ. ກ່ອນເຂົ້າພິທີດັ່ງກ່າວ ຄະນະຜູ້ແທນຂອງ ສະມາຄົມມິດຕະພາບ ລາວ-ສປ ປ ເກົາຫຼີ ແລະ ສະຖານເອກອັກຄະລັດ ຖະທູດແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ ກໍ່ໄດ້ເຂົ້າຢ້ຽມຂໍ່ານັບ ສະຫາຍ ບຸນຄົງ ຫຼ້າຈຽມພອນ, ເລຂາພັກແຂວງອຸດົມໄຊ.

ພິທີປາຖະກະຖາຄັ້ງນີ້ ໃຫ້ກຽດເຂົ້າຮ່ວມມີ: ສະຫາຍ ປອ. ອາດສະພັງທອງ ສີພັນດອນ, ກຳມະການສູນກາງພັກ, ເລຂາຄະນະພັກນະຄອນຫຼວງວຽງຈັນ, ປະທານສະມາຄົມມິດຕະພາບລາວ-ສປປ ເກົາຫຼີ; ສະຫາຍ ບຸນຄົງ ຫຼ້າຈຽມພອນ, ກຳມະການູນກາງພັກ, ເລຂາພັກແຂວງອຸດົມໄຊ;ສະຫາຍ ລີ ຢົງ ຊົນ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ ແລະ ມີບັນດາສະຫາຍການນຳພັກ-ລັດ, ພະນັກງານ, ນາຍ ແລະ ພົນທະຫານ, ຕຳຫຼວດ, ນັກຮຽນ-ນັກສຶກສາ  ແລະ ແຂກຖືກເຊີນ ຈຳນວນ 500 ກວ່າສະຫາຍ ເຂົ້າຮ່ວມ;

ໃນພິທີປາຖະກະຖາອັນມີຄວາມໝາຍສຳຄັນນີ້ ສະຫາຍ ລີ ຢົງ ຊົນ, ໄດ້ໃຫ້ກຽດຂຶ້ນກ່າວປາຖະກະຖາ ເຊິ່ງໄດ້ຍົກໃຫ້ເຫັນເຖິງບົດບາດການນຳພາ ແລະ ຜົນງານ ຂອງປະທານ ກິມ ເຈິງ ອຶນ, ຜູ້ນຳທີ່ຍິ່ງໃຫຍ່ຂອງປະຊາຊົນ ສປປ ເກົາຫຼີ ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນໄລຍະຜ່ານມາ ກໍ່ຄືການພັດທະນາຂອງ ສປປ ເກົາຫຼີ ໃນປະຈຸບັນພາຍໃຕ້ການນຳພາຂອງພັກແຮງງານ ເກົາຫຼີ ບົນເສັ້ນທາງສູ່ຈຸດໝາຍສັງຄົມນິຍົມ. ພ້ອມດຽວກັນນີ້, ກໍ່ຍັງໄດ້ຍົກໃຫ້ເຫັນເຖິງສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ ແລະ ສປປ ເກົາຫຼີ ທີ່ໄດ້ຮັບການເສີມຂະຫຍາຍ ແລະ ພັດທະນາເພີ່ມພູນຄູນສ້າງຢ່າງຕໍ່ເນື່ອງ ແລະ ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາ ຊົນສອງປະເທດ.